ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

25-31 ພຶດສະພາ 2026
ປີທີ 15
ສະບັບທີ 1067

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na


## ຜົນກອງປະຊຸມສະໄໝສາມັນຂອງລັດຖະບານປະຈຳເດືອນພຶດສະພາ




(ສພຊ) - ວັນທີ 28 ພຶດສະພານີ້, ທ່ານ ຄຳເຜີຍ ພົມມະສອນ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ) ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນກ່ຽວກັບຜົນກອງປະຊຸມສະໄໝສາມັນຂອງລັດຖະບານ ປະຈຳເດືອນພຶດສະພາ 2026 ເຊິ່ງທ່ານໃຫ້ຮູ້ວ່າ: ກອງປະຊຸມດັ່ງ

ອ່ານຕໍ່ໜ້າ 6

## ຍົກລະດັບຄວາມຮູ້, ຄວາມສາມາດ ໃຫ້ ສສຊ




(ສພຊ) - ກອງປະຊຸມສຳມະນາກ່ຽວກັບພາລະບົດບາດ ແລະ ໜ້າທີ່ຂອງສະພາແຫ່ງຊາດ ໃຫ້ແກ່ສະມາຊິກສະພາແຫ່ງຊາດ ຊຸດທີ X ໄດ້ຈັດຂຶ້ນທີ່ນະຄອນຫຼວງວຽງຈັນ ໃນລະຫວ່າງວັນທີ 25-28 ພຶດສະພາ 2026 ດຍການເປັນປະທານຂອງທ່ານ ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດແລະແຂກຖືກເຊີນ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນກ່າວເປີດວ່າ: ຈຸດປະສົງຂອງກອງປະຊຸມແມ່ນເພື່ອຍົກລະດັບຄວາມຮູ້, ຄວາມສາມາດ ແລະ ຄວາມເຂົ້າໃຈ ຕໍ່ພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ, ຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ທັງເປັນການສ້າງເງື່ອນໄຂໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ມີໂອ

ອ່ານຕໍ່ໜ້າ 3

## ສະຫາຍ ນາງ ສູນທອນ ໄຊຍະຈັກ ເຄື່ອນໄຫວວຽກງານຢູ່ແຂວງເຊກອງ



ອ່ານຕໍ່ໜ້າ 8

## ກອງປະຊຸມພົບປະຄັ້ງທີ 7 ລະຫວ່າງ ສະພາແຫ່ງຊາດລາວ ກັບ ລັດຖະສະພາເອີຣົບ



ອ່ານຕໍ່ໜ້າ 3



ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ປະຊາຊົນເລືອກເອົາຜູ້ແທນຂຶ້ນມາກໍເພື່ອຕາງໜ້າເຂົາເຈົ້າຮ່ວມໃນການຄຸ້ມຄອງລັດ ແຕ່ຫາກບໍ່ແມ່ນເພື່ອຍຶດສັກຕຳແໜ່ງ ແລະ ອຳນາດຂອງຜູ້ແທນແຕ່ປະການໃດ.

(ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 206)

ອ່ານຕໍ່ສະບັບໜ້າ

ຄົບຮອບ 66 ປີ

ລະນຶກວັນໂຕນຄຸກມະຫັດສະຈັນ ຂອງບັນດາຜູ້ນຳພັກ ແລະ ແນວລາວຮັກຊາດ

(24 ພຶດສະພາ 1960-24 ພຶດສະພາ 2026)



## ເຝິກອົບຮົມການນຳໃຊ້ຖານຂໍ້ມູນ ຄຸ້ມຄອງຄຳຮ້ອງຂໍຄວາມເປັນທຳ




(ສພຊ) - ກອງປະຊຸມເຝິກອົບຮົມການນຳໃຊ້ຖານຂໍ້ມູນໃນການຄຸ້ມຄອງຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ໄດ້ຈັດຂຶ້ນລະຫວ່າງວັນທີ 23-24 ພຶດສະພາ 2026 ທີ່ເມືອງແກ້ວອຸດົມແຂວງວຽງຈັນໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການສູນກາງພັກ, ປະທານກຳມາທິການກົດໝາຍ ແລະ ຍຸຕິທຳ (ກໝຍທ) ເຊິ່ງມີບັນດາທ່ານຮອງປະທານ ກໝຍທ; ຫົວໜ້າ-ຮອງຫົວໜ້າກົມ, ເລຂານຸການການນຳຂັ້ນສູງ, ຄະນະພະແນກ ແລະ ພະນັກງານທີ່ກ່ຽວຂ້ອງພາຍໃນ ສພຊ; ຫົວໜ້າ-ຮອງຫົວໜ້າຫ້ອງວ່າການ ແລະ ພະນັກງານທີ່ກ່ຽວຂ້ອງຂອງສະພາປະຊາຊົນ ຈາກ 2 ແຂວງ ຄື: ຫຼວງພະບາງ ແລະ ຄຳມ່ວນ; ຕາງໜ້າມູນນິທິ ເວສມິນສເຕີ ເພື່ອປະຊາທິປະໄຕ (Westminster Foundation for Democracy - WFD) ແລະທີມງານຄູຝຶກຈາກບໍລິສັດ ມັນຕິມີເດຍ ແອນ ເທັກໂນໂລຊີ ໂຊລູຊັນ ຈຳກັດ (MTS) ເຂົ້າຮ່ວມຫຼາຍກວ່າ 60 ທ່ານ.

ທ່ານ ນາງ ທຸມມາລີ ວົງພະຈັນ ກ່າວວ່າ: ການເຝິກອົບຮົມຄັ້ງນີ້ ເພື່ອສ້າງຄວາມພ້ອມ, ຄວາມຮັບຮູ້ ແລະ ເຂົ້າໃຈເປັນເອກະພາບ ໃນການນຳໃຊ້ລະບົບການຄຸ້ມຄອງສະຖິຕິຄຳຮ້ອງຂໍຄວາມເປັນທຳທີ່ເປັນລະບົບທັນສະໄໝ ເພື່ອເກັບກຳ, ສັງລວມຂໍ້ມູນຄຳຮ້ອງຂໍຄວາມເປັນທຳໃຫ້ມີຄວາມຮັບປະກັນແລະສະດວກໃນການນຳໃຊ້ ທັງຕອບສະໜອງໃຫ້ແກ່ການສັງລວມຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ ກໍຄືຂອງສະພາແຫ່ງຊາດ.

ອ່ານຕໍ່ໜ້າ 2

**ລະນຶກວັນໂຕນຄຸກມະຫັດມະຈັນຂອງບັນດາຜູ້ນຳພັກ ແລະ ແນວລາວສ້າງຊາດ ຄົບຮອບ 66 ປີ ຢ່າງສຸດໃຈ!**

# ລະດົມຄວາມຄິດໃສ່ນິຕິກຳຂອງ ຄປຈສພຂ




(ສພຊ) - ກອງປະຊຸມລະດົມແນວຄວາມຄິດ ໃສ່ນິຕິກຳຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ (ຄປຈສພຂ) ໄດ້ຈັດຂຶ້ນລະຫວ່າງວັນທີ 25-26 ພຶດສະພາ 2026 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ວຽງແກ້ວ ວັນນະຈັກ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ (ສພຊ), ມີບັນດາທ່ານຮອງປະທານ ແລະ ຫົວໜ້າ-ຮອງຫົວໜ້າຫ້ອງວ່າການ ສພຂ 18 ແຂວງ, ຄະນະກົມ ແລະ ອະດີດການນຳອາວຸໂສຂອງ ສພຊ ພ້ອມດ້ວຍແຂກທີ່ຖືກເຊີນ ເຂົ້າຮ່ວມຫຼາຍກວ່າ 80 ທ່ານ.

ຈຸດປະສົງກອງປະຊຸມຄັ້ງນີ້ ແມ່ນເພື່ອປຶກສາຫາລື, ລະດົມແນວຄວາມຄິດເຫັນໃສ່ບັນດາຮ່າງນິຕິກຳຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃຫ້ມີເນື້ອໃນສົມບູນ, ຄົບຖ້ວນ, ຊັດເຈນ, ສອດຄ່ອງກັບກົດໝາຍ, ສະພາບຄວາມເປັນຈິງ; ເຮັດໃຫ້ການກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄປຈສພຂ, ບັນດາຄະນະກຳມະການ, ຫ້ອງວ່າການ, ຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ ລວມທັງການກະກຽມ ແລະ ດຳເນີນກອງປະຊຸມຂອງສະພາປະຊາຊົນຂັ້ນແຂວງ ໃຫ້ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດໃນທົ່ວປະເທດ.

ທ່ານ ວຽງແກ້ວ ວັນນະຈັກ ກ່າວວ່າ: ເນື້ອໃນກອງປະຊຸມ ແມ່ນໄດ້ຜ່ານການຈັດຕັ້ງປະຕິບັດຜ່ານມາແລ້ວ, ແຕ່ມາຮອດສະພາປະຊາຊົນຂັ້ນແຂວງຊຸດທີ V ເນື່ອງຈາກວ່າໄດ້ມີການປັບປຸງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງແລະປັບປຸງກົງຈັກການຈັດຕັ້ງຂອງສະພາປະຊາຊົນຂັ້ນແຂວງ; ສະນັ້ນ, ກອງປະຊຸມຄັ້ງນີ້ ຖືເປັນໂອກາດດີທີ່ໄດ້ທົບທວນຄືນໃຫ້ມີຄວາມສອດຄ່ອງກັບກົດໝາຍ ແລະ ສະພາບຄວາມເປັນຈິງທີ່ຜ່ານການຈັດຕັ້ງປະຕິບັດໄລຍະຜ່ານມາ ມີອັນໃດຕ້ອງໄດ້ເອົາໃຈໃສ່ເສີມຂະຫຍາຍ ແລະ ມີອັນໃດທີ່ຈະພ້ອມກັນປັບປຸງແກ້ໄຂ ໃຫ້ມີຄວາມຊັດເຈນ, ອຸດົມສົມບູນ, ເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດໃນທົ່ວປະເທດ.

ກອງປະຊຸມໄດ້ຮັບຟັງການສະເໜີຮ່າງມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ 7 ສະບັບ ຄື: 1. ການຈັດຕັ້ງແລະການເຄື່ອນໄຫວຂອງຄະນະສະມາຊິກສະພາປະຊາຊົນຂັ້ນແຂວງປະຈຳເຂດເລືອກຕັ້ງຂັ້ນເມືອງ; 2. ການຈັດຕັ້ງແລະການເຄື່ອນໄຫວຂອງຄະນະປະຈຳປະຊາຊົນຂັ້ນແຂວງ; 3. ການຈັດຕັ້ງແລະການເຄື່ອນໄຫວຂອງຄະນະກຳມະການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຍຸຕິທຳ; 4. ການຈັດຕັ້ງແລະການເຄື່ອນໄຫວຂອງຄະນະກຳມະການວັດທະນະທຳ-ສັງຄົມ, ບັນດາເຜົ່າ ແລະ ສາສະໜາ; 5. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການເສດຖະກິດ, ການເງິນ ແລະ ສິ່ງແວດລ້ອມ; 6. ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງວ່າການສະພາປະຊາຊົນຂັ້ນແຂວງ; 7. ລະບຽບການກະກຽມແລະດຳເນີນກອງປະຊຸມຂອງສະພາປະຊາຊົນແຂວງ/ນະຄອນຫຼວງ. ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບ, ສຸມສະຕິປັນຍາໃນການຄົ້ນຄວ້າ, ປະກອບຄຳເຫັນ, ປຶກສາຫາລື, ຖອດຖອນບົດຮຽນ ຕໍ່ບັນດາເນື້ອໃນເຫຼົ່ານີ້ຢ່າງເລິກເຊິ່ງກວ້າງຂວາງ, ເຮັດໃຫ້ກອງປະຊຸມດຳເນີນໄປດ້ວຍບັນຍາກາດຟົດຟື້ນ.

**(ສອນສັກ ວັນວິໄຊ)**



## ເຝິກອົບຮົມ...

(ຕໍ່ຈາກໜ້າ 1)

ກອງປະຊຸມໄດ້ຮັບຟັງການສະເໜີກ່ຽວກັບວິທີການນຳໃຊ້ຖານຂໍ້ມູນຄຸ້ມຄອງຄຳຮ້ອງຂໍຄວາມເປັນທຳຂອງຄະນະປະຈຳສະພາແຫ່ງຊາດ; ເຝິກການນຳໃຊ້ກ່ຽວກັບການເຂົ້າລະບົບຕາມແຕ່ລະປະເພດບັນຊີ, ການຍື່ນຄຳຮ້ອງຜ່ານລະບົບອອນລາຍ, ການບັນທຶກຂໍ້ມູນຄຳຮ້ອງເຂົ້າລະບົບ, ຂັ້ນຕອນການຕິດຕາມຄຳຮ້ອງ ແລະ ຊອກຂໍ້ມູນ, ຂັ້ນຕອນການສະຫຼຸບ ແລະ ລາຍງານ, ແລະ ການຮັບໂອນຄຳຮ້ອງ. ຈາກນັ້ນ, ຜູ້ເຂົ້າຮ່ວມກໍໄດ້ເອົາໃຈໃສ່ສຶກສາ, ຮຽນຮູ້ການນຳໃຊ້ຖານຂໍ້ມູນ ແລະ ປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາ, ດ້ວຍເຫດດ້ວຍຜົນ ໂດຍສະເພາະແມ່ນບັນຫາທີ່ເຫັນວ່າຍັງບໍ່ເຂົ້າໃຈເພື່ອໃຫ້ມີຄວາມເປັນເອກະພາບກັນ.

**(ສອນສັກ ວັນວິໄຊ)**

# ປັບປຸງກົດໝາຍການຕ້ານ ແລະ ສະກັດກັ້ນອາຊະຍະກຳທາງລະບົບຄອມພິວເຕີ



(ສພຊ) - ກົມຄວາມປອດໄພທາງໄຊເບີ, ກະຊວງເຕັກໂນໂລຊີ ແລະ ການສື່ສານ (ກຕສ) ໄດ້ຈັດກອງປະຊຸມປຶກສາຫາລືແລະທາບທາມຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີ (ສະບັບປັບປຸງ) ໃນວັນທີ 26 ພຶດສະພາ 2026 ໂດຍການເປັນປະທານຂອງທ່ານ ແກ້ວວິສຸກ ໂສລະພົມ ຮອງລັດຖະມົນຕີ ກຕສ, ມີບັນດາຫົວໜ້າ-ຮອງຫົວໜ້າກົມ, ທຽບເທົ່າກົມ ອ້ອມຂ້າງກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ທ່ານ ແກ້ວວິສຸກ ໂສລະພົມ ກ່າວວ່າ: ການປັບປຸງຮ່າງກົດໝາຍດັ່ງກ່າວເພື່ອສ້າງຂອບເຂດນິຕິກຳທີ່ຮັດກຸມຂຶ້ນ ເພື່ອເປັນບ່ອນອີງໃນການຕິດຕາມ, ກວດກາ ແລະ ດຳເນີນຄະດີຕໍ່ຜູ້ກະທຳຜິດຢ່າງເຂັ້ມງວດ, ຕ້ານ ແລະ ສະກັດກັ້ນ ເພື່ອຈຳກັດ ແລະ ກຳຈັດທຸກອາຊະຍາກຳ, ປົກປ້ອງລະບົບຖານຂໍ້ມູນ, ລະບົບເຊີເວີ, ຂໍ້ມູນທາງລະບົບຄອມພິວເຕີ, ກຽດສັກສີຂອງບຸກຄົນ ແລະ ຮັບປະກັນຄວາມໝັ້ນຄົງຂອງຊາດ, ເຊື່ອມໂຍງກັບສາກົນ ເພື່ອໃຫ້ສອດຄ່ອງກັບສົນທິສັນຍາ ແລະ ມາດຕະຖານສາກົນ ວ່າດ້ວຍການຮ່ວມມືຕ້ານອາຊະຍາກຳທາງໄຊເບີ ເຊິ່ງກົດໝາຍສະບັບນີ້ ບໍ່ພຽງຈະເປັນເຄື່ອງມືຂອງລັດຖະບານເທົ່ານັ້ນ ແຕ່ຍັງເປັນກົນໄກສຳຄັນໃນການສ້າງຄວາມເຊື່ອໝັ້ນໃຫ້ແກ່ນັກລົງທຶນ ແລະ ການພັດທະນາເສດຖະກິດດິຈິຕອນໃນ ສປປລາວ ໃຫ້ມີຄວາມຍືນຍົງ.

ທ່ານ ສຸເນດໂຕ ຊາພັກດີ ຮອງຫົວໜ້າກົມຄວາມປອດໄພທາງໄຊເບີ ໄດ້ລາຍງານສະພາບການຄົ້ນຄວ້າ, ປັບປຸງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນອາຊະຍາກຳທາງລະບົບຄອມພິວເຕີສະບັບປີ2015 ທີ່ນຳໃຊ້ໃນປັດຈຸບັນ ເຫັນວ່າມີເນື້ອໃນບາງສ່ວນຍັງບໍ່ທັນສອດຄ່ອງກັບສະພາບການອາຊະຍາກຳທາງໄຊເບີໃນປັດຈຸບັນ ກໍຄື ໄພຂົ່ມຂູ່, ໄພຄຸກຄາມ, ຮູບແບບການໂຈມຕີທາງໄຊເບີ.

# ກິດຈະກຳບານເຕະ ກົມເລຂານຸການ-ລັດວິສາຫະກິດໄຟຟ້າລາວ




(ສພຊ) - ວັນທີ 22 ພຶດສະພາ 2026 ກົມເລຂານຸການ, ຫ້ອງວ່າການສະພາແຫ່ງຊາດ ໄດ້ສ້າງກິດຈະກຳກິລາບານເຕະມິດຕະພາບ ຊາຍ-ຍິງ ຮ່ວມກັບລັດວິສາຫະກິດ ໄຟຟ້າລາວ (ຟຟລ) ທີ່ເດີ່ນກິລາເຟີຣາຣີ ໂດຍມີທ່ານ ບຸນທັນ ບຸນວິໄລ, ທ່ານ ຄຳສະໄໝ ສຳມາວົງ ແລະ ທ່ານ ເຂັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ ທັງສາມທ່ານ, ບັນດາທ່ານຮອງຜູ້ອຳນວຍການໃຫຍ່ ຟຟລ, ພະນັກງານ-ລັດຖະກອນ ແລະ ນັກກິລາຂອງທັງສອງພາກສ່ວນ ເຂົ້າຮ່ວມຢ່າງຟົດຟື້ນ.

ການຈັດກິດຈະກຳໃນຄັ້ງນີ້ ຈຸດປະສົງເພື່ອສ້າງຂະບວນການຂໍ່ານັບຮັບຕ້ອນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນ ຂອງອົງຄະຄະນະພັກສະພາແຫ່ງຊາດ ທີ່ຈະໄດ້ດຳເນີນຂຶ້ນໃນເດືອນມິຖຸນານີ້, ຮັດແໜ້ນຄວາມສາມັກຄີແລະສ້າງສິ່ງອຳນວຍຄວາມສະດວກໃນການປະສານສົມທົບດ້ານວຽກງານວິຊາສະເພາະລະຫວ່າງກົມເລຂານຸການ ກັບ ລັດວິສາຫະກິດ ໄຟຟ້າລາວ ໃຫ້ນັບມື້ມີຄວາມແໜ້ນແຟ້ນຍິ່ງໆຂຶ້ນ ທັງເປັນການສົ່ງເສີມໃຫ້ພະນັກງານ-ລັດຖະກອນ ໄດ້ອອກກຳລັງກາຍເພື່ອສຸຂະພາບທີ່ແຂງແຮງ.

ໂອກາດດັ່ງກ່າວ, ທັງສອງພາກສ່ວນ ຍັງໄດ້ມີພິທີມອບ-ຮັບເຄື່ອງຊ່ວຍເຫຼືອ ແລະ ອຸປະກອນກິລາຮ່ວມກັນ ໂດຍລັດວິສາຫະກິດ ໄຟຟ້າລາວ ໄດ້ມອບຊຸດກິລາ (ຊາຍ-ຍິງ) ຈຳນວນ 45 ຊຸດ ໃຫ້ແກ່ກົມເລຂານຸການ ແລະ ກົມເລຂານຸການ ກໍໄດ້ມອບປຶ້ມບັນທຶກຂອງສະພາແຫ່ງຊາດ ຈຳນວນ 100 ຫົວ ໃຫ້ແກ່ ຟຟລ ເພື່ອເປັນທີ່ລະນຶກ ແລະ ນຳໃຊ້ເຂົ້າໃນວຽກງານວິຊາສະເພາະ; ຫຼັງຈາກນັ້ນ, ກໍໄດ້ຮ່ວມພາເຂົ້າສາມັກຄີ ເພື່ອເພີ່ມທະວີຄວາມສະໜິດສະໜົມຮັກແພງເຊິ່ງກັນແລະກັນຕື່ມອີກ.

# ກອງປະຊຸມເປີດກວ້າງທາບທາມ ຄຳເຫັນໃສ່ຮ່າງກົດໝາຍລັດຖະບານ



(ສພຊ) - ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ຫສນຍ) ຈັດກອງປະຊຸມເປີດກວ້າງ ເພື່ອທາບທາມຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ຂັ້ນສູນກາງແລະນະຄອນຫຼວງວຽງຈັນ ໃນວັນທີ 25 ພຶດສະພານີ້ ທີ່ຫໍປະຊຸມແຫ່ງຊາດ ໂດຍການເປັນປະທານຂອງທ່ານ ວິແກ້ວ ບຸບຜາວັນ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ມີຮອງລັດຖະມົນຕີ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ຄະນະນຳ ແລະ ຜູ້ຕາງໜ້າຈາກບັນດາກະຊວງ-ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ລາຍງານກ່ຽວກັບເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງຮ່າງກົດໝາຍວ່າດ້ວຍລັດຖະບານ ສະບັບປີ 2021 ແລະ ຜົນການປະເມີນການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວໃນໄລຍະຜ່ານມາ ໂດຍສະເພາະບັນດາເນື້ອໃນທີ່ຕິດພັນກັບການປັບປຸງລັດຖະທຳມະນູນ, ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ, ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 5 ປີ (2026-2030) ຕາມທິດສ້າງບາດກ້າວບຸກທະລຸ ລວມທັງການຫັນກົນໄກການຄຸ້ມຄອງບໍລິຫານລັດ ໃຫ້ມີຄວາມວ່ອງໄວ, ທັນສະໄໝ, ເປັນລະບົບຄົບຊຸດ, ຖືກຕ້ອງຄົບຖ້ວນແລະທັນກັບສະພາບການ; ການປັບປຸງໂຄງປະກອບກົງຈັກຂອງລັດຖະບານ ຊຸດທີ X ແລະການກຳນົດລະບຽບ ແລະ ກົນໄກວິທີເຮັດວຽກ ສະບັບເລກທີ 29/ນຍ, ລົງວັນທີ 20 ເມສາ 2026.

ຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາະຈີ້ມ ໃຫ້ຜູ້ເຂົ້າຮ່ວມປະກອບຄຳຄິດເຫັນຢ່າງຫຼາກຫຼາຍ ແລະ ກົງໄປກົງມາ ແນໃສ່ເຮັດໃຫ້ຮ່າງກົດໝາຍມີເນື້ອໃນຄົບຖ້ວນສົມບູນ, ຖືກຕ້ອງ, ສອດຄ່ອງກັບຕົວຈິງ, ເປັນເອກະພາບ ແລະ ເປັນບ່ອນອີງໃຫ້ແກ່ການຈັດຕັ້ງ, ການເຄື່ອນໄຫວວຽກງານຂອງທ່ານນາຍົກ-ຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ, ນຳເອົາປະໂຫຍດສູງສຸດມາໃຫ້ປະເທດຊາດ ແລະ ປະຊາຊົນ.

**(ຂ່າວ-ພາບ: ກົມປະຊາສຳພັນ ຫສນຍ)**



## ກອງປະຊຸມ...

(ຕໍ່ຈາກໜ້າ 1)

(ສພຊ) - ວັນທີ 25 ພຶດສະພານີ້, ສະພາແຫ່ງຊາດລາວ ໄດ້ເປັນເຈົ້າພາບຈັດກອງປະຊຸມພົບປະລະຫວ່າງສະພາແຫ່ງຊາດລາວ ກັບ ລັດຖະສະພາເອີຣົບ ຫຼື ອີພີ(European Parliament-EP) ໂດຍການເປັນປະທານຮ່ວມຂອງທ່ານ ໂພໄຊ ໄຊຄຳພິທູນ ປະທານກຳມາທິການການຕ່າງປະເທດ ແລະ ທ່ານ ວູເທີ ເບັກ (Wouter BEKE) ປະທານຄະນະສະມາຊິກລັດຖະສະພາທີ່ຮັບຜິດຊອບພົວພັນກັບປະເທດອາຊີຕາເວັນອອກສຽງໃຕ້ ຫຼື ອາຊຽນ ຂອງ EP ໃນໂອກາດທີ່ເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ ລະຫວ່າງວັນທີ 24-28 ພຶດສະພາ 2026.

ກອງປະຊຸມພົບປະຄັ້ງທີ 7 ລະຫວ່າງສະພາແຫ່ງຊາດລາວ ກັບ ລັດຖະສະພາເອີຣົບ ໄດ້ຮ່ວມກັນທົບທວນຄືນການພົວພັນການຮ່ວມມືຕະຫຼອດໄລຍະ 5 ທົດສະວັດຜ່ານມາ ນັບແຕ່ ສປປລາວ ແລະ ສະຫະພາບເອີຣົບ ຫຼື ອີຢູ (European Union - EU) ໄດ້ສ້າງຕັ້ງສາຍພົວພັນການທູດນຳກັນ ໃນວັນທີ 21 ພະຈິກ 1975 ທັງສອງຝ່າຍໄດ້ມີການພົວພັນ ແລະ ຮ່ວມມືທີ່ດີນຳກັນມາຕະຫຼອດ ສະແດງອອກໃນການແລກປ່ຽນຄະນະຜູ້ແທນເຊິ່ງກັນແລະກັນ ແລະ ມີການຮ່ວມມືໃນຫຼາຍຂະແໜງການ; ໃນກອງປະຊຸມ, ສອງຝ່າຍໄດ້ປຶກສາຫາລື, ແລກປ່ຽນຄຳຄິດເຫັນ ແລະ ບົດຮຽນປະສົບການທີ່ດີໃນການພັດທະນາເສດຖະກິດ-ສັງຄົມ, ວຽກງານດ້ານສິດທິມະນຸດ, ການພົວພັນການຄ້າ ແລະ ການລົງທຶນ ລວມທັງສະພາບພົ້ນເດັ່ນຂອງພາກພື້ນ ແລະ ສາກົນ, ແລະ ບັນຫາອື່ນໆ ທີ່ສອງຝ່າຍມີຄວາມສົນໃຈ ແນໃສ່ປະກອບສ່ວນເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີນຳກັນ ລະຫວ່າງ ສປປລາວ ກັບ ສະຫະພາບເອີຣົບ ກໍຄືລະຫວ່າງສະພາແຫ່ງຊາດລາວ ກັບ ລັດຖະສະພາເອີຣົບ.

ການມາຢ້ຽມຢາມຄັ້ງນີ້, ຄະນະຜູ້ແທນລັດຖະສະພາເອີຣົບ ຍັງໄດ້ເຂົ້າຢ້ຽມຂໍ່ານັບທ່ານ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍແລະຕີລາຄາສູງຕໍ່ຜົນການພົບປະເຮັດວຽກ, ແລກປ່ຽນທັດສະນະແລະປະສົບການນຳກັນໃນຫຼາຍບັນຫາ ເປັນຕົ້ນແມ່ນການປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ, ການເປັນຕົວແທນຂອງປະຊາຊົນ, ການຍົກສູງຄຸນນະພາບການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດລາວ, ຕີລາຄາການພົວພັນຮ່ວມມືລະຫວ່າງ ສປປລາວ ກັບ ສະຫະພາບເອີຣົບ ທັງຍັງໄດ້ແຈ້ງສະພາບການພົ້ນເດັ່ນຂອງ ສປປລາວ ແລະ ສະພາແຫ່ງຊາດລາວ ໃຫ້ຄະນະຜູ້ແທນຮັບຊາບອີກດ້ວຍ.

ໃນໂອກາດພົບປະເຮັດວຽກຢູ່ສະພາແຫ່ງຊາດລາວ, ທ່ານ ວູເທີ ເບັກ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນແລະອຳນວຍຄວາມສະດວກໃຫ້ແກ່ຄະນະຜູ້ແທນລັດຖະສະພາເອີຣົບທັງໄດ້ແລກປ່ຽນທິດທາງການຮ່ວມມືໃນຕໍ່ໜ້າ ແລະ ຈະສືບຕໍ່ຈັດກອງປະຊຸມພົບປະແລກປ່ຽນໃນລັກສະນະດັ່ງກ່າວນີ້ຕື່ມອີກ ເພື່ອເສີມຂະຫຍາຍສາຍພົວພັນຮ່ວມມືລະຫວ່າງລັດຖະສະພາເອີຣົບ ກັບ ສະພາແຫ່ງຊາດລາວ ໃຫ້ນັບມື້ນັບດີຂຶ້ນກວ່າເກົ່າ.

ນອກຈາກນີ້, ຄະນະຜູ້ແທນລັດຖະສະພາເອີຣົບຍັງໄດ້ເຂົ້າຢ້ຽມຂໍ່ານັບທ່ານຮອງນາຍົກລັດຖະມົນຕີ ແລະ ລັດຖະມົນຕີກະຊວງການຕ່າງປະເທດ, ທ່ານຮອງລັດຖະມົນຕີກະຊວງເຕັກໂນໂລຊີແລະການສື່ສານ, ທ່ານຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ; ເຄື່ອນໄຫວຢ້ຽມຢາມຫ້ອງການກອງເລຂາຄະນະກຳມາທິການແມ່ນ້ຳຂອງສາກົນແລະສະຖານທີ່ທາງວັດທະນະທຳຈຳນວນໜຶ່ງຢູ່ນະຄອນຫຼວງວຽງຈັນລວມທັງເຂົ້າຢ້ຽມຂໍ່ານັບທ່ານປະທານຄະນະກຳມະການປົກຄອງແຂວງຫຼວງພະບາງ, ຢ້ຽມຢາມວິທະຍາໄລເຕັກນິກວິຊາຊີບຫຼວງພະບາງ ແລະ ບັນດາໂຄງການພາຍໃຕ້ການສະໜັບສະໜູນຂອງອີຢູ ເປັນຕົ້ນແມ່ນ: ໂຄງການປະຕິຮູບ-ລາວຍືນລາວ, ໂຄງການ Makara ແລະ ໂຄງການອື່ນໆ ທີ່ແຂວງຫຼວງພະບາງ.




## ຍົກລະດັບ...

(ຕໍ່ຈາກໜ້າ 1)

ກາດແລກປ່ຽນຄຳຄິດຄຳເຫັນເຊິ່ງກັນແລະກັນ ຕາມຫົວຂໍ້ຕ່າງໆທີ່ຄະນະຮັບຜິດຊອບໄດ້ກະກຽມ ເນື່ອງຈາກວ່າສະມາຊິກສະພາແຫ່ງຊາດ ຊຸດທີ X ເປັນສະມາຊິກໃໝ່ກວມ 80% ຈຶ່ງມີຄວາມຈຳເປັນໃນການເຝິກອົບຮົມ. ກອງປະຊຸມຄັ້ງນີ້ ມີບັນດາວິທະຍາກອນທີ່ເປັນອະດີດການນຳຂອງສະພາແຫ່ງຊາດ ຊຸດທີIX, ຊ່ຽວຊານຕ່າງປະເທດຫຼາຍທ່ານ ຈະໄດ້ມາຖ່າຍທອດຄວາມຮູ້ ແລະ ແລກປ່ຽນປະສົບການໃນຫຼາຍຫົວຂໍ້; ສະນັ້ນ, ເພື່ອເຮັດໃຫ້ການຄົ້ນຄວ້າເນື້ອໃນຕ່າງໆ ມີຄຸນນະພາບ, ມີປະສິດທິຜົນ ແລະ ບັນລຸຕາມແຜນການທີ່ວາງໄວ້ ຂໍຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມ ຈົ່ງຍົກສູງຄວາມຮັບຜິດຊອບໃນການສຸມໃສ່ຄົ້ນຄວ້າ, ແລກປ່ຽນບົດຮຽນ ໃຫ້ຮັບຮູ້ເຂົ້າໃຈແຈ້ງ ແລະ ເລິກເຊິ່ງ ເພື່ອຮັບປະກັນການເຮັດໜ້າທີ່ການເມືອງຂອງຕົນ ໃຫ້ນັບມື້ດີຂຶ້ນກວ່າເກົ່າ ສົມກັບຄວາມໄວ້ວາງໃຈໃນຖານະເປັນຕົວແທນຂອງປະຊາຊົນລາວບັນດາເຜົ່າ.

ໃນພິທີປິດ, ທ່ານ ກອງແກ້ວ ໄຊສົງຄາມ ຮອງປະທານສະພາແຫ່ງຊາດ ໄດ້ກ່າວວ່າ: ຕະຫຼອດໄລຍະດຳເນີນການສຳມະນາ ໄດ້ຮັບຟັງການສະເໜີບົດຮຽນທັງດ້ານທິດສະດີແລະພຶດຕິກຳຕົວຈິງ ຈາກບັນດາວິທະຍາກອນທີ່ເປັນອະດີດການນຳຂັ້ນສູງຂອງສະພາແຫ່ງຊາດ, ວິທະຍາກອນຈາກກະຊວງ-ອົງການທັງພາຍໃນ ແລະ ຕ່າງປະເທດ ໃນບັນດາຫົວຂໍ້ຕ່າງໆຢ່າງຫຼວງຫຼາຍ ເຊິ່ງລ້ວນແຕ່ມີຄວາມສຳຄັນແລະມີຜົນປະໂຫຍດຕໍ່ການນຳມາໝູນໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານຕົວຈິງ; ພ້ອມກັນນີ້, ຜູ້ແທນກອງປະຊຸມຍັງໄດ້ເອົາໃຈໃສ່ຄົ້ນຄວ້າ, ປະກອບຄຳຄິດເຫັນ ແລະ ຍົກສະພາບຄວາມເປັນຈິງ ເພື່ອມາແລກປ່ຽນບົດຮຽນເຊິ່ງກັນແລະກັນ ໂດຍມີຜູ້ປະກອບຄຳເຫັນທັງໝົດ 32 ເທື່ອທ່ານ ເປັນຍິງ 6 ເທື່ອທ່ານ ພ້ອມທັງມີການຊີ້ແຈງອະທິບາຍຢ່າງມີເຫດຜົນພາວະວິໄສ ຈາກວິທະຍາກອນ ເພື່ອໃຫ້ຄວາມກະຈ່າງແຈ້ງແກ່ຜູ້ແທນກອງປະຊຸມ. ໂດຍລວມແລ້ວເຫັນວ່າບັນດາສຳມະນາກອນໄດ້ມີຄວາມຮັບຮູ້, ເຂົ້າໃຈຢ່າງເລິກເຊິ່ງ ແລະ ເປັນເອກະພາບຕໍ່ກັບບັນດາເນື້ອໃນຕ່າງໆ ແລະ ບົດຮຽນໃນຄັ້ງນີ້ ເຫັນວ່າສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນຂັ້ນແຂວງທົ່ວປະເທດ ໃນສະພາບປັດຈຸບັນ ແລະ ໄລຍະໃໝ່.

ທ່ານ ກອງແກ້ວ ໄຊສົງຄາມ ຍັງເນັ້ນໃຫ້ບັນດາ ສສຊ ນຳເອົາບົດຮຽນ, ປະສົບການ ແລະ ພຶດຕິກຳຕົວຈິງທີ່ໄດ້ຈາກການເຂົ້າຮ່ວມກອງປະຊຸມຄັ້ງນີ້ ໄປສະຫຼຸບຖອດຖອນບົດຮຽນ ເພື່ອດັດປັບເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ ໂດຍສະເພາະນຳໃຊ້ເຂົ້າໃນການກະກຽມຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບັນດາເນື້ອໃນສຳຄັນຕ່າງໆ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ທີ່ຈະດຳເນີນຂຶ້ນໃນໄວໆນີ້ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**(ກົງທະນູຄຳ ພິພັດເສລີ)**

## ສສຊ ແລະ ສສຂ ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ




(ສພຂ)-ວັນທີ 18-20 ພຶດສະພາ 2026, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງຄຳເກີດນຳໂດຍ ທ່ານ ໄຊອຳພອນ ສີຫາວົງ ກຳມະການປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ (ຜູ້ປະຈຳການ), ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ຊຸດທີ V ຢູ່ສະໂມສອນບ້ານນາກະດຶກ, ບ້ານທົ່ງແຄະ, ສະໂມສອນບ້ານທົ່ງແສ, ບ້ານໂພນໄຊ, ສຳນັກເມືອງຄຳເກີດ, ສະໂມສອນບ້ານນ້ຳພາວແລະບ້ານແຈ້ງສະຫວ່າງ; ມີຄະນະກຳມະການປົກຄອງເມືອງ, ຄະນະບໍລິຫານງານພັກເມືອງ, ປະທານ, ຮອງປະທານຕາແສງ ຕະຫຼອດຮອດພະນັກງານຫຼັກແຫຼ່ງ, ເລຂາພັກບ້ານ, ເຖົ້າແກ່ແນວໂຮມ ແລະ ປະຊາຊົນຜູ້ມີສິດເລືອກຕັ້ງພາຍໃນບ້ານເຂົ້າຮ່ວມຮັບຟັງ.

ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດວຽກງານ ຈາກອຳນາດການປົກຄອງ ທັງເປີດໂອກາດໃຫ້ປະຊາຊົນສະເໜີບັນຫາຕ່າງໆ ເພື່ອນຳໄປສະເໜີຕໍ່ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ ເປັນຕົ້ນການບັນຫາຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ, ການລ້ຽງສັດພາຍໃນບ້ານ, ບັນຫາຢາເສບຕິດ ແລະ ບັນຫາເສັ້ນທາງທີ່ຕິດພັນກັບການພັດທະນາບ້ານ; ຈາກນັ້ນ, ສສຊ ແລະ ສສຂ ໄດ້ເຜີຍແຜ່ຜົນສຳເລັດຂອງກອງປະຊຸມຄັ້ງປະຖົມມະລຶກຂອງສພຊ ຊຸດທີ X ແລະ ສພຂ ບໍລິຄຳໄຊ ຊຸດທີ V ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມ ທັງເນັ້ນໜັກໃຫ້ສືບຕໍ່ຍຶດໝັ້ນຕໍ່ການນຳພາຂອງພັກ-ລັດ, ສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງຕາມແນວທາງຂອງພັກ-ລັດ, ເພີ່ມທະວີສ້າງເງື່ອນໄຂເສດຖະກິດຄອບຄົວປູກຝັງ, ລ້ຽງສັດ ກຸ້ມຕົນເອງເປັນເຈົ້າຕົນເອງ, ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດເຕົ້າໂຮມຄວາມສາມັກຄີປ່ອງດອງເປັນປຶກແຜ່ນແໜ້ນໜາ, ຕ້ານ ແລະ ສະກັດກັ້ນປະກົດການຫຍໍ້ທໍ້ຕ່າງໆຢ່າງເປັນເຈົ້າການ ໃຫ້ມີຄວາມສະຫງົບປອດໄພ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາ; ສ່ວນຄຳສະເໜີບາງບັນຫາໄດ້ອະທິບາຍ ແລະ ຊີ້ແຈງກັບທີ່, ບາງບັນຫາຈະນຳໄປຄົ້ນຄວ້າພິຈະລະນາປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເພື່ອຫາວິທີທາງແກ້ໄຂ.

ພ້ອມນີ້ໜ, ວັນທີ 18 ພຶດສະພາ 2026 ທ່ານ ໄຊຍະສຸກ ຫຼຽນຕະກຸນ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງປາກຊັນ, ປະທານຄະນະກຳມະການປກຊ-ປກສ ແລະ ຍຸຕິທຳ ໄດ້ນຳພາ ສສຂ ປະຈຳເຂດເຂດເລືອກຕັ້ງເມືອງປາກຊັນ ພ້ອມດ້ວຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຊ ຊຸດທີ X ແລະ ສພຂ ບໍລິຄຳໄຊ ຊຸດທີ V ຢູ່ກອງບັນຊາການທະຫານເມືອງປາກຊັນ, ບ້ານທົ່ງນ້ອຍເມືອງ.

**(ລະອອງດາວ-ໂສລະຢ້ຳ)**

## ຮອງປະທານ ສພຂ ພົບປະຜູ້ມີສິດເລືອກຕັ້ງຢູ່ເມືອງພິນ



(ສພຂ)-ວັນທີ 19-20 ພຶດສະພາ 2026 ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງພິນນຳໂດຍ ທ່ານ ພູລຳພອນ ສີຫາວົງ, ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ສສຊປະຈຳເຂດເລືອກຕັ້ງທີ 13 ແລະ ທ່ານ ພູລັດຕະນະ ພົມມະຫາໄຊ ເລຂາຄະນບໍລິຫານງານພັກເມືອງ, ຫົວໜ້າ ສສຂ ປະຈຳເຂດເລືອກຕັ້ງເມືອງພິນ ພ້ອມດ້ວຍ ສສຂ ປະຈຳເຂດເລືອກຕັ້ງເມືອງພິນ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ຊຸດທີ V ຢູ່ 3 ກຸ່ມບ້ານເຂດບ້ານຕາດໄຮເຊ, ກຸ່ມບ້ານເຂດບ້ານບົກ ແລະ ເທສະບານເມືອງ; ໂດຍການຕ້ອນຮັບຂອງທ່ານ ເກດສະໝາ ບຸດຕາວົງ ປະທານຄະນະກຳມະການປົກຄອງເມືອງພິນ; ມີຫົວໜ້າຫ້ອງການ, ຄະນະຫ້ອງການທີ່ກ່ຽວຂ້ອງ, ເລຂາພັກຮາກຖານ, ຄະນະພັກຮາກຖານກຸ່ມບ້ານ, ເລຂາ-ນາຍບ້ານ, ຮອງນາຍບ້ານ, ປະຊາຊົນຜູ້ມີສິດເລືອກຕັ້ງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການເຄື່ອນໄຫວບັນດາທ່ານ ສສຊ, ສສຂ ໄດ້ເຜີຍແຜ່ຜົນສຳເລັດເຜີຍແຜ່ຜົນສຳເລັດ ກອງປະຊຸມຄັ້ງປະຖົມມະລຶກຂອງ ສພຊ ຊຸດທີ X ແລະ ສພຂ ຊຸດທີ V; ຈາກນັ້ນ, ກໍໄດ້ເປີດໂອກາດໃຫ້ການນຳຂອງເມືອງ, ການຈັດຕັ້ງຂັ້ນບ້ານ ກໍຄືປະຊາຊົນພາຍໃນແຕ່ລະກຸ່ມບ້ານສະເໜີຄວາມຕ້ອງການຂອງແຕ່ລະຈຸດ ໂດຍສະເພາະແມ່ນບັນຫາການພັດທະນາພື້ນຖານໂຄງລ່າງ, ການສ້ອມແປງທາງ; ການສ້ອມແປງ ແລະ ສ້າງຂົວຂ້າມພາຍໃນກຸ່ມບ້ານ, ການຂະຫຍາຍຕາຄ່າຍໄຟຟ້າ, ການແກ້ໄຂບັນຫາຢາເສບຕິດພາຍໃນກຸ່ມບ້ານ; ຈາກນັ້ນ, ບັນດາທ່ານ ສສຊ ແລະ ສສຂ ຍັງໄດ້ຕອບບັນຫາການຊັກຖາມຂອງພໍ່ແມ່ປະຊາຊົນ ເພື່ອໃຫ້ຮັບຮູ້ ແລະ ເຂົ້າໃຈເຖິງບັນຫາຕ່າງໆຕໍ່ກັບສະພາບການອັນລວມຕໍ່ກັບການພັດທະນາຂອງປະເທດໃນໄລຍະປະຈຸບັນ ທັງຮັບເອົາຄຳສະເໜີຂອງອຳນາດການປົກຄອງບ້ານ ແລະ ພໍ່ແມ່ປະຊາຊົນໄປນຳສະເໜີ ຕໍ່ຂະແໜງການກ່ຽວຂ້ອງ, ເພື່ອນຳໄປປຶກສາຫາລື ແລະ ຄົ້ນຄວ້າແກ້ໄຂໃນຂັ້ນຕໍ່ໄປ ທັງຮຽກຮ້ອງໃຫ້ທຸກພາກສ່ວນເປັນເຈົ້າການໃນການຈັດຕັ້ງປະຕິບັດຕໍ່ວຽກງານ ໃຫ້ປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ວາງໄວ້.

ພ້ອມນັ້ນ, ສສຊ ແລະ ສສຂ ຍັງໄດ້ມອບເຄື່ອງອຸປະໂພກຈຳນວນໜຶ່ງ ແລະ ສັງກະສີ ມອບໃຫ້ຄອບຄົວທີ່ຖືກ ອຸທົບກະໄພ ຢູ່ກຸ່ມບ້ານເຂດບ້ານບົກ ແລະ ຕິດຕາມກວດກາພື້ນທີເບິ່ງຂົວຂ້າມເຊບັ້ງຫຽງ ເຂດບ້ານຕາດໄຮເຊຕື່ມອີກ.

## ສະມາຊິກສະພາ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຢູ່ເມືອງໂຂງ

(ສພຂ)-ວັນທີ 25-26 ພຶດສະພາຜ່ານມາ, ທ່ານ ສີງຄຳ ວົງພະຈັນ ຮອງປະທານກຳມາທິການກົດໝາຍ ແລະ ຍຸຕິທຳ ສະພາແຫ່ງຊາດ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ສົມທົບກັບທ່ານ ພູທົງ ຫຼວງໄຊຍະລາດ ຄະນະພັກຮາກຖານພະແນກອຸດສາຫະກຳການຄ້າ ຫົວໜ້າຝ່າຍຄຸ້ມຄອງລະບົບໄຟຟ້າພາກໃຕ້, ສະມາຊິກສະພາປະຊາຊົນແຂວງ (ສສຂ) ຊຸດທີ V ປະຈຳເຂດເລືອກຕັ້ງເມືອງໂຂງ, ທ່ານ ພັທ. ກໍປະສິດ ວົງພູທອນ ຄະນະປະຈຳພັກເມືອງ ຫົວໜ້າກອງບັນຊາການທະຫານເມືອງ ສສຂ ປະຈຳເຂດເລືອກຕັ້ງເມືອງໂຂງ ແລະ ທ່ານ ນາງ ໄພວັນ ສີບຸນເຮືອງ ກຳມະການພັກເມືອງ ສສຂ ປະຈຳເຂດເລືອກຕັ້ງເມືອງໂຂງ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ຊຸດທີ V ຢູ່ເມືອງໂຂງ ໂດຍການຕ້ອນຮັບຈາກຄະນະນຳເມືອງ, ຄະນະກຳມະການປົກຄອງຕາແສງຕາແສງ, ພະນັກງານຫັນລົງກໍ່ສ້າງຮາກຖານປະຈຳຕາແສງ ແລະ ພໍ່ແມ່ປະຊາຊົນຂອງເມືອງໂຂງຢ່າງອົບອຸ່ນ.



ໃນການເຄື່ອນໄຫວໄດ້ຮັບຟັງການລາຍງານກ່ຽວກັບສະພາບການການລວມ, ການຈັດຕັ້ງປະຕິບັດວຽກງານຂອງທ້ອງຖິ່ນ ແລະ ຄຳສະເໜີຂອງຜູ້ມີສິດເລືອກຕັ້ງທີ່ລົງເລິກແລະຕິດພັນການຫຼາຍວຽກງານ; ຈາກນັ້ນ, ສສຊ-ສສຂ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງ ສພຊ ຊຸດທີ X ແລະ ສພຂ ຈຳປາສັກ ຊຸດທີ V ເຊິ່ງໄດ້ຍົກໃຫ້ເຫັນເນື້ອໃນທີ່ ສພຊ ແລະ ສພຂ ໄດ້ພິຈາລະນາ ຮັບຮອງການເລືອກຕັ້ງຕຳແໜ່ງສຳຄັນຕ່າງໆ ຂອງ ສພຊ ແລະ ສພຂ ຈຳປາສັກ; ການພິຈາລະນາ ຮັບຮອງການປັບປຸງໂຮມກຳມາທິການ ຂອງ ສພຊແລະບັນດາວຽກງານຂອງລັດຖະບານ ເປັນຕົ້ນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງລັດຖະບານ ໃນນັ້ນ, ໄດ້ພິຈານາຮັບຮອງເອົາແຜນການສ້າງເສັ້ນທາງລົດໄຟ ຈາກແຂວງຄຳມ່ວນ ຫາ ສສ.ຫວຽດນາມ, ແຜນການສ້າງ ແລະ ປັບປຸງ ລັດຖະທຳມະນູນ ແລະ ກົດໝາຍ ໃນໄລຍະ 5 ປີ, ວຽກງານໃນຂົງເຂດສຶກສາທິການ, ສາທາລະນະສຸກ, ວຽກງານຂົງເຂດຕຸລາການ, ວຽກງານກວດກາລັດ, ວຽກງານກວດສອບ ແລະ ແຜນການແກ້ໄຂບັນຫາຄວາມຫຍຸ້ງຍາກຕ່າງໆທີ່ເກີດຂຶ້ນໃນແຕ່ລະທ້ອງຖິ່ນ ຢ່າງເລິກເຊິ່ງ; ນອກນັ້ນ, ຍັງໄດ້ຊີ້ແຈງອະທິບາຍຕໍ່ບາງເນື້ອໃນຄຳສະເໜີ ທັງເນັ້ນໜັກໃຫ້ພ້ອມກັນສືບຕໍ່ຮັກສາມູນເຊື້ອອັນດີງາມ, ສ້າງຄວາມສະໜາມສາມັກຄີພາຍໃນ, ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຕາມການມອບໝາຍໃຫ້ມີຜົນສຳເລັດ ໂດຍສະເພາະການຈັດຕັ້ງຜັນຂະຫຍາຍມະຕິຂອງສູນກາງພັກ, ມະຕິຂອງອົງຄະນະພັກແຂວງຈຳປາສັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ວາລະແຫ່ງຊາດ ແລະ ມະຕິວ່າດ້ວຍການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໃນໄລຍະໃໝ່ (ສອຈ) ເຂົ້າຮ່ວມທຸກຂະບວນການຂອງພັກ, ຂອງຊາດ ກໍຄືການຈັດຕັ້ງຈັດຂຶ້ນເປັນຂະບວນຟົດຟື້ນ.

ກ່ອນໜ້ານັ້ນ, ວັນທີ 21 ພຶດສະພາຜ່ານມາ, ສສຊ-ສສຂ ໄດ້ມອບເງິນສົມທົບທຶນເຂົ້າໃນການກໍ່ສ້າງເສັ້ນທາງເບຕົງ ໃຫ້ແກ່ 2 ບ້ານຄື: ບ້ານແສນຮາດ 10 ລ້ານກີບ ແລະ ບ້ານເມືອງແສນ 6 ລ້ານກີບ ຕາງໜ້າກ່າວມອບໂດຍທ່ານ ທິບພະສອນສະມາເລີກປະທານຄະນະກຳມະການ ປກຊ-ປກສ ແລະ ຍຸຕິທຳ ສະພາປະຊາຊົນແຂວງ, ສສຊ ປະຈຳເຂດເລືອກຕັ້ງທີ 15 ພ້ອມດ້ວຍຄະນະຕາງໜ້າອຳນາດການປົກຄອງບ້ານ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມເປັນສັກຂີພະຍານ.

**(ອານິນ ແກ້ວມີສຸກັນ)**

# ຮອງປະທານສະພາປະຊາຊົນແຂວງຈຳປາສັກ ພົບປະຢ້ຽມຢາມປະຊາຊົນເມືອງໂພນທອງ



(ສພຂ) - ວັນທີ 19-22 ພຶດສະພານີ້ ທ່ານ ແກ້ວລັດຕະນະ ສີຫາວົງ ຄະນະປະຈຳພັກແຂວງ, ຮອງປະທານສະພາປະຊາຊົນແຂວງຈຳປາສັກ, ສະມາຊິກສະພາແຫ່ງຊາດ (ສສຊ) ເຂດເລືອກຕັ້ງທີ 15 ແຂວງຈຳປາສັກ ພ້ອມດ້ວຍ ທ່ານ ບຸນທັນ ໄຊຍະແສງເລຂາພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງໂພນທອງ ແລະ ຄະນະ ໄດ້ເຄື່ອນໄຫວພົບປະຢ້ຽມຢາມປະຊາຊົນຢູ່ບ້ານໜອງແຕ້ນ້ອຍ, ຕາແສງເກົ່າເກິງ ສະໂມສອນຂອງເມືອງໂພນທອງ, ບ້ານສັກ, ບ້ານບົກ ແລະ ບ້ານດອນຕະແບງ ໂດຍການຕ້ອນຮັບຈາກຄະນະນຳຂອງອົງການປົກຄອງເມືອງ, ຫ້ອງການ-ກົມກອງ, ປະທານຄະນະກຳມະການປົກຄອງຕາແສງ ພ້ອມດ້ວຍຄະນະອົງການປົກຄອງຕາແສງ, ອຳນາດການປົກຄອງ ຕະຫຼອດຮອດພໍ່ແມ່ປະຊາຊົນ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນການລົງເຄື່ອນໄຫວ ໄດ້ຮັບຟັງການລາຍງານຫຍໍ້ກ່ຽວກັບສະພາບການລວມຂອງບ້ານ, ການຈັດຕັ້ງປະຕິບັດວຽກງານ ແລະ ສະເໜີບາງບັນຫາ ທີ່ຕິດພັນກັບຊີວິດການເປັນຢູ່ຂອງປະຊາຊົນ; ຈາກນັ້ນ, ສສຊ-ສສຂ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ແລະ ສະພາປະຊາຊົນແຂວງ (ສພຂ) ຈຳປາສັກຊຸດທີ V ໂດຍຍົກໃຫ້ເຫັນເນື້ອໃນທີ່ໄດ້ພິຈາລະນາ ຮັບຮອງ ເປັນຕົ້ນການເລືອກຕັ້ງຕຳແໜ່ງສຳຄັນຕ່າງໆ ຂອງ ສພຊ ແລະ ສພຂ ຈຳປາສັກ ໃຫ້ຄົບຖ້ວນຕາມອົງປະກອບ ຂອງ ສພຊ ແລະ ສພຂ; ການປັບປຸງ, ໂຮມກຳມາທິການ ຂອງ ສພຊ ແລະ ບັນດາວຽກງານຂອງລັດຖະບານ ເປັນຕົ້ນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງລັດຖະບານ ເປັນຕົ້ນຮັບຮອງເອົາແຜນການສ້າງເສັ້ນທາງລົດໄຟ ຈາກແຂວງຄຳມ່ວນ ຫາ ສສ.ຫວຽດນາມ, ແຜນການສ້າງ ແລະ ປັບປຸງກົດໝາຍນໄລຍະ 5 ປີ, ວຽກງານໃນຂົງເຂດສຶກສາທິການ, ສາທາລະນະສຸກ, ວຽກງານຂົງເຂດຕຸລາການ, ວຽກງານກວດກາລັດ, ວຽກງານກວດສອບ ແລະ ແຜນການແກ້ໄຂບັນຫາຄວາມຫຍຸ້ງຍາກຕ່າງໆທີ່ເກີດຂຶ້ນໃນແຕ່ລະທ້ອງຖິ່ນ ຢ່າງເລິກເຊິ່ງ; ພ້ອມນັ້ນ, ສສຊ-ສສຂ ຍັງໄດ້ເນັ້ນໜັກໃຫ້ສືບຕໍ່ຮັກສາມູນເຊື້ອອັນດີງາມ, ສ້າງຄວາມສະໜາມສາມັກຄີພາຍໃນ, ປະກອບສ່ວນທຸກກຳລັງແຮງໃນການພັດທະນາເສດຖະກິດ-ສັງຄົມ ກໍ່ຄືພັດທະນາຊີວິດການເປັນຢູ່ສ້າງເສດຖະກິດຄອບຄົວໃຫ້ມີຄວາມເຂັ້ມແຂງເປັນກ່າວໆ.

**(ສົມວິຈິດ ໄຊມົນຕີ)**

## ອາດ ກະວີລາວ

# ດົງຫາຍກາຍຮ້ອນ

**# ບຸນມີ ແກ້ວວົງສາ**

❊ ພະນອມໄພຂາດສິ້ນ
ສຸລິແຜດເຜົາລົນ
ນອນສະແຄງຄຶງຂວ້ຳ
ອາຍຮ້ອນບີບຮັດເນື້ອ

ເທິງຖິ່ນມາຕຸພູມ
ໝູ່ຄົນຮົນຮ້ອນ
ພັກຕາບໍ່ພໍຍິບ
ໄຄເຫື່ອຍ້ອຍຫຼັ່ງລົນ ໝ່າຍເດ!

❊ ເຮືອນເຄີຍເນົາຢູ່ຢັ້ງ
ນອນຂວ້ຳຫງາຍສະແຄງ
ຄາວກ່ອນຍູງຍາງແຕ້
ນອນນັ່ງຫົວຍ່າວຍຸ້ມ

ປາງກ່ອນເຢັນສະບາຍ
ຢູ່ສະບາຍຫາຍຮ້ອນ
ຄອມແຄຂຽວສະອຸ່ມ
ສະບາຍເນື້ອຊື່ນໃຈ

❊ ເວລານານນັບໄດ້
ແດດເຜົາຜານເມືອງຄົນ
ຍ້ອນປ່າໝອງເມີນໜ້າ
ມະນຸດຖາງຖາກຖິ້ມ

ຄ.ສ ໃໝ່ຕາມການ
ຈົ່ມແຊວລະງົມຮ້ອງ
ມວນພຶກສາຫາຍຫ່າງ
ພັນໄມ້ເກືອບແປນ

❊ ໄພຈິ່ງໄດ້ຈໍ່ຈ້ຳ
ເໝືອນດັ່ງໝຶກເຜົາມັນ
ປ່າບໍ່ຄືນຄອນເຄົ້າ
ຄາວຫຼັງປາງກ່ອນກີ້

ໂຮມກະໜ່ຳຊວງອົກ
ເຖົ່າຫົມອົມເອົ້າ
ພູມລຳເນົາເໝືອນດັ່ງ
ໜາແໜ້ນທົ່ວແຫ່ງຫົນ

❊ ຄົນເອີຍ ຮີບຟັ່ງຟ້າວ
ພໍໄດ້ອາໄສຊົມ
ໃຫ້ຊຸ່ມເຢັນຄືກີ້
ເປັນພະລັງຊ່ວຍຍູ້

ພາກັນປູກປຸກລະດົມ
ປ່າດົງດອນໄມ້
ອຸດົມດີມູນມັ່ງ
ໂລກາຮ້ອນຫ່າງໜີ ທ່ານເອີຍ!



## ສັກຂາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມຫ້ຽນ**

❊ **ຫຍັບມໍ່ໃກ້ວັນເດັກນ້ອຍສາກົນ ແລະ ວັນປູກຕົ້ນໄມ້ແຫ່ງຊາດ** ຫຼາຍພາກສ່ວນຄົງຈະກະກຽມແນວພັນໄມ້, ຝຸ່ນໃສ່ ແລະ ສະຖານທີ່ ແຕ່ບັນຍາກາດປີນີ້ ຄືຊິຄືກັນກັບປີຜ່ານມາ ເພາະວ່າ ພັກ-ລັດ ເພີ່ນເອົາໃຈໃສ່ການພັດທະນາ ຕ້ອງຄຽງຄູ່ກັບສີຂຽວ **1 ມິຖຸນາ**ວຽນແອ່ເຂົ້າ ເຮົາກຽມປູກແນວພັນ ລໍນັບວັນເຊີຍຊົມ ກິ່ງໃບລຳຕົ້ນ ຜົນຮັບອົກຊີແຊນໃຫ້ ສັດສາມະນຸດພ່າ ທົ່ວສັງຄົມເພິ່ງລົ້ນ ພະນາໄມ້ປ່າຂຽວ **ນັບແລ້ວ!**

❊ **ຂໍສະແດງຄວາມຊົມເຊີຍ ແລະ ຂອບໃຈ**ມາຍັງ**ທຸກພາກສ່ວນ** ທີ່ໃຫ້ການຊ່ວຍເຫຼືອ**ປະຊາຊົນລາວ ທີ່ຕິດຢູ່ພາຍໃນຖ້ຳ** ທີ່ບ້ານພັນໄຊ ເມືອງລ້ອງແຈ້ງ ແຂວງໄຊສົມບູນ ໃນຊ່ວງອາທິດທີ່ຜ່ານມາ ຂໍຍ່ມືຍົກຍ້ອງ ຊົມຊື່ນຍິນດີ **ກ່ອນນາ!** ອາສາທຸກຂະແໜງ ຕ່າງແດນທັງລາວນີ້ ມີທັງຄວາມເກັ່ງກ້າ ອາສາຊົດຊ່ອຍ ດ້ອຍທໍ້ໃຈມຸ່ງໝັ້ນ ບໍ່ເກງຢ້ານຢ່ອນກົວ **ເຈົ້າເອີຍ!**

## 🤗 ຊອບຍິ້ມ 🤗

# ພົ້ງອື່ງ

### ເລື່ອງ: ແວ່ນຕາ

ມື້ໜຶ່ງ, ທ້າວ ກິບ້ອຍ ກັບຈາກໂຮງຮຽນ ພໍແຕ່ມາຮອດເຮືອນ ກໍແລ່ນຫາພໍ່ທັນທີ ທັງເວົ້າຂຶ້ນວ່າ:

**ທ້າວ ກິບ້ອຍ:** ແວ່ນຕາອີ່ພໍ່ ກະຂະຫຍາຍໄດ້ໝົດທຸກແນວເບາະ?

**ພໍ່:** ເອີ້ ກະໄດ້ຫັ້ນລະ!

ທ້າວ ກິບ້ອຍ ຈັບໃບຄະແນນຍື່ນໃຫ້ພໍ່ ພ້ອມທັງເວົ້າຂຶ້ນວ່າ:

**ທ້າວ ກິບ້ອຍ:** ຄັນຊັ້ນ ກະໃສ່ເບິ່ງໃບຄະແນນໃຫ້ລູກແດ່, ຂະຫຍາຍຈາກ 2 ໃຫ້ເປັນ 10 ໂລດເດີອີ່ພໍ່, ມື້ອື່ນລູກຊິເອົາໄປອ້າງໝູ່ຢູ່ໂຮງຮຽນ.

**ພໍ່:** ຮ້ວາຍ! ບັກອັນນີ້



## ສຸພາສິດ-ຄະຕິເຕືອນໃຈ

*# ດອກຫຍ້າ*

"ຢ່າຢຽບຄົນຕົກຕ່ຳ ຢ່າຍ່ຳຍີຄົນທີ່ລົ້ມ
ຢ່າທັບຖົມຄົນຜິດຫວັງ ຢ່າຊ້ຳຕື່ມຄົນອ່ອນແອ"

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 1)

ກ່າວ ໄດ້ໄຂຂຶ້ນໃນຕອນເຊົ້າວັນທີ 27 ແລະ ອັດລົງໃນຕອນເຊົ້າວັນທີ 28 ພຶດສະພານີ້ ທີ່ສຳນັກງານນາຍົກລັດຖະມົນຕີ, ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ, ມີບັນດາທ່ານຮອງນາຍົກລັດຖະມົນຕີ, ສະມາຊິກລັດຖະບານ ແລະ ຜູ້ຕາງໜ້າບັນດາກະຊວງ-ອົງການ, ຄະນະປະຈຳສະພາແຫ່ງຊາດ ເຂົ້າຮ່ວມແບບເຊິ່ງໜ້າ ແລະ ບັນດາທ່ານປະທານ, ຮອງປະທານຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ເຂົ້າຮ່ວມຜ່ານລະບົບທາງໄກ (ອອນລາຍ) ເພື່ອຮັບຟັງ ແລະ ປະກອບຄຳເຫັນຕໍ່ການລາຍງານສະພາບພົ້ນເດັ່ນປະຈຳເດືອນພຶດສະພາ ແລະ ທິດທາງແຜນວຽກຈຸດສຸມປະຈຳເດືອນມິຖຸນາ 2026; ກອງປະຊຸມຄັ້ງນີ້ ໄດ້ພ້ອມກັນຄົ້ນຄວ້າ, ປຶກສາຫາລື, ປະກອບຄຳເຫັນ ແລະ ພິຈາລະນາຕໍ່ບັນດາຫົວຂໍ້ໃນ 3 ວາລະສຳຄັນ ຄື:

ວາລະທີ 1: ລາຍງານສະພາບພົ້ນເດັ່ນ ແລະ ວຽກງານຈຸດສຸມຮີບດ່ວນຈຳນວນໜຶ່ງ ຄື: (1) ການປະຕິບັດວຽກຈຸດສຸມພົ້ນເດັ່ນປະຈຳເດືອນພຶດສະພາ ແລະ ທິດທາງແຜນການປະຈຳເດືອນມິຖຸນາ 2026 ຂອງລັດຖະບານ ແລະ ທິດຜັນຂະຫຍາຍຜົນກອງປະຊຸມຄົບຄະນະຄັ້ງທີ 3 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII; (2) ສະພາບພົ້ນເດັ່ນພາກພື້ນ ແລະ ສາກົນ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ), ການເກັບກູ້ອາວຸດ ແລະ ວັດຖຸລະເບີດ ໃນໄລຍະຜ່ານມາ; (3) ແຜນການປັບປຸງລະບົບການສຶກສາສາຍສາມັນ ຈາກ 5+4+3 ເປັນ 6+3+3 ແລະ ການສອບເສັງນັກຮຽນເກັ່ງທົ່ວປະເທດ; (4) ການກະກຽມຄວາມພ້ອມເພື່ອເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳອາຊຽນ ຄັ້ງທີ 22 (AMSTI-22), ກອງປະຊຸມເຈົ້າໜ້າທີ່ອາວຸໂສ ຄັ້ງທີ 89 (COSTI-89) ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ ໃນລະຫວ່າງວັນທີ 22-26 ມິຖຸນາ 2026 ແລະ (5) ສະພາບປາຕາຍຢູ່ນ້ຳເຊໂດນ ເມືອງຊະນະສົມບູນ ແຂວງຈຳປາສັກ.

ຕໍ່ການສະຫຼຸບວຽກງານພົ້ນເດັ່ນປະຈຳເດືອນພຶດສະພາ 2026 ກອງປະຊຸມໄດ້ຕີລາຄາເຖິງວ່າສະພາບການພາກພື້ນ ແລະ ສາກົນ ຍັງສືບຕໍ່ເຄັ່ງຮ້ອນ, ສັບສົນແລະຄາດຄະເນໄດ້ຍາກ ໂດຍສະເພາະບັນຫາຂໍ້ຂັດແຍ້ງຢູ່ເຂດຕາເວັນອອກກາງ ແລະ ເຂດອື່ນໆ ເຊິ່ງໄດ້ສົ່ງຜົນເຮັດໃຫ້ສະພາບເສດຖະກິດໂລກ ທີ່ມີຄວາມຫຍຸ້ງຍາກຢູ່ແລ້ວນັ້ນ ສືບຕໍ່ມີຜົນກະທົບເປັນວົງກວ້າງຕື່ມ ລວມເຖິງຢູ່ປະເທດລາວເຮົາ ໂດຍສະເພາະລາຄາສິນຄ້າ, ການຂົນສົ່ງ ແລະ ອື່ນໆ; ແຕ່ລັດຖະບານກໍໄດ້ສຸມໃສ່ຈັດຕັ້ງປະຕິບັດບັນດາມາດຕະການ ແລະ ວຽກຈຸດສຸມທີ່ກຳນົດໄວ້ມີຜົນສຳເລັດຫຼາຍດ້ານ ເປັນຕົ້ນ ທົ່ວປະເທດສືບຕໍ່ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບແລະເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ໄດ້ສຸມຄວາມພະຍາຍາມທຸກວິທີເພື່ອຊ່ວຍເຫຼືອກອບກູ້ປະຊາຊົນ ຈຳນວນ 7 ຄົນ ທີ່ຕິດຢູ່ໃນຖ້ຳຜາບ້ານພັນໄຊ ເມືອງລ້ອງແຈ້ງ ແຂວງໄຊສົມບູນ; ໄດ້ເພີ່ມທະວີລົງແກ້ໄຂບັນຫາການລັກລອບຂຸດຄົ້ນແຮ່ທາດ ຕາມຄຳສັ່ງເລກທີ 46/ນຍ ຢ່າງເຂັ້ມງວດ ແລະ ເດັດຂາດກວ່າເກົ່າ ໂດຍສະເພາະຢູ່ແຂວງຫຼວງພະບາງ, ໄຊຍະບູລີ, ວຽງຈັນ, ສະຫວັນນະເຂດ ແລະ ບາງທ້ອງຖິ່ນ ສາມາດພົບເຫັນ ແລະ ຍຶດໄດ້ຂອງກາງປະເພດພາຫະນະ-ກົນຈັກ ແລະ ອຸປະກອນຕ່າງໆ ຫຼາຍສົມຄວນ ພ້ອມທັງກັກຕົວຜູ້ລັກລອບເພື່ອມາດຳເນີນຕາມກົດໝາຍ ແລະ ລະບຽບການ; ໄດ້ມ້າງເປົ້າໝາຍກຸ່ມແກ້ງສະແກມເມີ ຢູ່ຫຼາຍແຂວງ ແລະ ນະຄອນຫຼວງວຽງຈັນ ເຊິ່ງສາມາດກັກຕົວຜູ້ຕ້ອງຫາເປັນຈຳນວນຫຼາຍ ມີທັງຄົນລາວແລະຄົນຕ່າງປະເທດພ້ອມທັງໄດ້ດຳເນີນຕາມກົດໝາຍ; ສາມາດແກ້ໄຂ ແລະ ສະໜອງນ້ຳມັນເຊື້ອໄຟ ໃຫ້ສັງຄົມໄດ້ຊົມໃຊ້ໃນທົ່ວປະເທດກວມອັດຕາສ່ວນສູງຂຶ້ນ; ຈັດເກັບລາຍຮັບເຂົ້າງົບປະມານໄດ້ 40% ຂອງແຜນການປີ, ການປະຕິບັດແຜນລາຍຈ່າຍປະຕິບັດໄດ້ 25% ຂອງແຜນການປີ, ສະສົມຄັງສຳຮອງເງິນຕາຕ່າງປະເທດ ກຸ້ມການນຳເຂົ້າຫຼາຍກວ່າ 5 ເດືອນ; ໄດ້ສຸມໃສ່ປັບປຸງ ແລະ ກໍ່ສ້າງເສັ້ນທາງຫຼວງແຫ່ງຊາດ 13 ເໜືອ-ໃຕ້, ທາງເລກ 9, 12, ການປັບປຸງສະໜາມບິນປາກເຊ ແລະ ການສຶກສາຄວາມເປັນໄປໄດ້ ສຳຫຼວດ-ອອກແບບເບື້ອງຕົ້ນ ສະໜາມບິນຜົ້ງສາລີ ກໍມີຄວາມຄືບໜ້າດີ; ສຳເລັດການສອບເສັງນັກຮຽນຊັ້ນປະຖົມໃນຂອບເຂດທົ່ວປະເທດ; ໄດ້ເອົາໃຈໃສ່ວຽກງານໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວ ຕິດພັນກັບການເຜີຍແຜ່ວັດທະນະທຳ, ສາມາດດຶງດູດນັກທ່ອງທ່ຽວພາຍໃນເດືອນໄດ້ເກືອບ 5 ແສນເທື່ອຄົນ; ໄດ້ເພີ່ມຄວາມເອົາໃຈໃສ່ເຝົ້າລະວັງພະຍາດໄຂ້ຫວັດສັດປີກໃນຄົນ; ໄດ້ເອົາໃຈໃສ່ການເຄື່ອນວຽກງານຕ່າງປະເທດຢ່າງມີຟົບໄຫວ ໂດຍສະເພາະການເຄື່ອນໄຫວຢ້ຽມຢາມບັນດາປະເທດເພື່ອນມິດ ແລະ ເຂົ້າຮ່ວມກອງປະຊຸມສາກົນຕ່າງໆ, ໄດ້ຕິດຕາມ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດ ທີ່ມາເຄື່ອນໄຫວວຽກງານຢູ່ ສປປ ລາວ.

ຄຽງຄູ່ກັບຜົນສຳເລັດດັ່ງກ່າວ ກໍຍັງມີວຽກງານຈຳນວນໜຶ່ງທີ່ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ ໃຫ້ມີການຫັນປ່ຽນດີຂຶ້ນກວ່າເກົ່າ ເປັນຕົ້ນ: ບັນຫາສະແກມເມີ, ການປຸ້ນຈີ້ຊິງຊັບ ແລະ ການສ້າງຄວາມບໍ່ສະຫງົບຢູ່ພາຍໃນສັງຄົມ; ບັນຫາການສະໜອງໄຟຟ້າ (ໄຟຟ້າຕົກ-ໄຟຟ້າດັບ) ແລະ ການສະໜອງນ້ຳປະປາ ທີ່ບໍ່ພຽງພໍ; ຄວາມເປັນເຈົ້າໃນການຈັດຕັ້ງປະຕິບັດທິດຊີ້ນຳຂອງລັດຖະບານ; ການພັດທະນາ-ປັບປຸງພື້ນຖານໂຄງລ່າງເສັ້ນທາງ, ການຄຸ້ມຄອງ ແລະ ແກ້ໄຂບັນຫາຂ່າວບິດເບືອນຜ່ານສື່ສັງຄົມອອນລາຍ ໃຫ້ແຂງແຮງ ລວມທັງການໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງພັກ-ລັດຖະບານໃຫ້ກວ້າງຂວາງ; ການເຄົາລົບປະຕິບັດລະບຽບການ-ກົດໝາຍ ແລະ ອື່ນໆ.

ສຳລັບແຜນວຽກຈຸດສຸມໃນເດືອນມິຖຸນາ 2026 ຂອງລັດຖະບານ ຈະຕ້ອງໄດ້ສືບຕໍ່ສຸມໃສ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ; ມະຕິວ່າດ້ວຍການສ້າງເສດຖະກິດ ເອກະລາດເປັນເຈົ້າຕົນເອງ ໃນໄລຍະໃໝ່, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030), ທິດທາງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປີ 2026 ທີ່ສະພາແຫ່ງຊາດໄດ້ຮັບຮອງ ຕາມມະຕິ 177/ສພຊ ແລະ ສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍຕ່າງໆໃນມະຕິຂອງສະພາແຫ່ງຊາດ ທີ່ພົວພັນກັບລັດຖະບານ. ໃນນີ້, ໃຫ້ເອົາໃຈໃສ່ບາງວຽກຈຳນວນໜຶ່ງຄື:

1. ສືບຕໍ່ຈັດຕັ້ງປະຕິບັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ໂດຍສຸມໃສ່ຮັກສາຄວາມສະຫງົບຕາມແລວຊາຍແດນ, ແກ້ໄຂບັນຫາປາກົດການຫຍໍ້ທໍ້ທາງສັງຄົມຕ່າງໆ ເປັນຕົ້ນ ບັນຫາສະແກມເມີ, ບັນຫາຢາເສບຕິດ, ການເກັບກູ້ອາວຸດ ແລະ ວັດຖຸລະເບີດ, ການຄ້າ-ຂາຍເຖື່ອນ, ບັນຫາປຸ້ນຈີ້, ຂີ້ລັກງັດແງະ, ບັນຫາອຸບັດເຫດຕາມທ້ອງຖະໜົນ ແລະ ອື່ນໆ ໃຫ້ຫຼຸດໜ້ອຍຖອຍລົງ; ຄຸ້ມຄອງສະຖານທີ່ບັນເທີງ, ສະຖານທີ່ບໍລິການ ແລະ ສະຖານທີ່ພັກເຊົາຕ່າງໆ ທີ່ຄົນຕ່າງປະເທດມາເຊົ່າ ໃຫ້ດຳເນີນຖືກຕ້ອງຕາມລະບຽບກົດໝາຍ.

2. ສຸມໃສ່ກະກຽມບັນດາເນື້ອໃນທີ່ຈະນຳເຂົ້າລາຍງານຕໍ່ກອງປະຊຸມລັດຖະບານເປີດກວ້າງ ຄັ້ງທີ I ປີ 2026, ກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະລັດຖະບານ, ກອງປະຊຸມສະໄໝວິສາມັນ ຂອງສະພາແຫ່ງຊາດ ຊຸດທີ X; ສຸມໃສ່ຈັດຕັ້ງຜັນຂະຫຍາຍທິດຊີ້ນຳຂອງທ່ານເລຂາທິການໃຫຍ່, ປະທານປະເທດ ຕໍ່ກອງປະຊຸມລັດຖະບານຄັ້ງປະຖົມມະລຶກ ຊຸດທີ X ກໍຄືທິດຊີ້ນຳກອງປະຊຸມຄົບຄະນະ ຄັ້ງທີ 3 ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ດ້ວຍຄວາມຮັບຜິດຊອບສູງ.

3. ໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ຂັ້ນສູນກາງ ແລະ ທ້ອງຖິ່ນ ສືບຕໍ່ຕິດຕາມ ແລະ ກະກຽມຮັບມືກັບໄພພິບັດທີ່ອາດຈະເກີດຂຶ້ນ, ພ້ອມທັງມີມາດຕະການຟື້ນຟູຜົນກະທົບຈາກໄພພິບັດຢ່າງທັນການ; ສືບຕໍ່ໃຫ້ການຊ່ວຍເຫຼືອປະຊາຊົນທີ່ຕິດຢູ່ຖ້ຳຜາບ້ານພັນໄຊ ເມືອງລ້ອງແຈ້ງ ແຂວງໄຊສົມບູນ ພ້ອມກັນນັ້ນ, ກໍໃຫ້ແຂວງໄຊສົມບູນ ຮີບຮ້ອນຄົ້ນຄວ້າຮູບການຍ້ອງຍໍຕໍ່ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຕ່າງໆລວມທັງພົນລະເມືອງຕ່າງປະເທດທີ່ໃຫ້ການຊ່ວຍເຫຼືອໃນພາລະກິດຄັ້ງນີ້ ໃຫ້ທັນການ ແລະ ເໝາະສົມ.

4. ສຸມໃສ່ການເກັບລາຍຮັບງົບປະມານຈາກແຫຼ່ງລາຍຮັບທີ່ມີແລ້ວໃຫ້ຄົບຖ້ວນ ດ້ວຍການສຸມໃສ່ການຫັນເປັນທັນສະໄໝໃຫ້ແຂງແຮງ ແລະ ປາກົດຜົນເປັນຈິງຫຼາຍຂຶ້ນ.

5. ໃຫ້ທະນາຄານ ແຫ່ງ ສປປລາວ ສືບຕໍ່ດັດສົມເງິນຕາຕ່າງປະເທດ ໃຫ້ສາມາດຮັບປະກັນການສະໜອງເງິນຕາຕ່າງປະເທດໃຫ້ການຊຳລະການນຳເຂົ້ານ້ຳມັນເຊື້ອໄຟ, ພ້ອມທັງຄົ້ນຄວ້າມາດຕະການສະໜັບສະໜູນດ້ານການເງິນໃຫ້ສິນເຊື່ອດອກເບ້ຍຕ່ຳແກ່ຊາວກະສິກອນທີ່ໄດ້ຮັບຜົນກະທົບຈາກລາຄານ້ຳມັນເຊື້ອໄຟ.

6. ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ສືບຕໍ່ຈັດຕັ້ງ 6 ມາດຕະການ ໃນການແກ້ໄຂຜົນກະທົບຈາກລາຄານ້ຳມັນເຊື້ອໄຟຢ່າງເຂັ້ມງວດ ແລະ ສົມທົບກັບກະຊວງປ້ອງກັນປະເທດ, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ພາກສ່ວນກ່ຽວຂ້ອງ ຮີບຮ້ອນກຳນົດຈຸດແລະອອກແບບສາງນ້ຳມັນເຊື້ອໄຟຢູ່ບັນດາແຂວງ ໃຫ້ສຳເລັດຕາມແຜນການ.

7. ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເອົາໃຈໃສ່ຊີ້ນຳພະແນກກະສິກຳ ແລະ ສິ່ງແວດລ້ອມບັນດາແຂວງໃນຂອບເຂດທົ່ວປະເທດ ເພີ່ມທະວີເອົາໃຈໃສ່ການເກັບກ່ຽວຜົນຜະລິດລະດູແລ້ງ ແລະ ການກະກຽມໃຫ້ແກ່ການຜະລິດລະດູຝົນ, ການຟື້ນຟູສ້ອມແປງໂຄງການຊົນລະປະທານ, ສ້ອມແປງແລະອະນາໄມຄອງເໝືອງ, ອ່າງເກັບນ້ຳແລະກຽມຈັກສູບນ້ຳສຳຮອງໄວ້ໃນຈຸດທີ່ຈຳເປັນ ທັງເອົາໃຈໃສ່ຕິດຕາມ, ເຝົ້າລະວັງ, ຕ້ານ, ສະກັດກັ້ນ ແລະ ປ້ອງກັນ ໂດຍກະກຽມວິຊາການດ້ານສັດຕະວະແພດແລະເຄື່ອງມືອຸປະກອນ, ຢາກັນພະຍາດ ແລະ ຢາປິ່ນປົວສັດ ເພື່ອພ້ອມຕອບໂຕ້ການລະບາດຂອງພະຍາດສັດທີ່ອາດຈະເກີດຂຶ້ນ.

8. ໃຫ້ບັນດາກະຊວງ, ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການກະກຽມປູກຕົ້ນໄມ້ໃນໂອກາດວັນປູກຕົ້ນໄມ້ແຫ່ງຊາດ ແລະ ວັນເດັກນ້ອຍສາກົນ ພາຍໃຕ້ຄຳຂວັນ “ຮ່ວມແຮງຮ່ວມໃຈປູກຕົ້ນໄມ້ໃຫ້ໄດ້ໜຶ່ງຕົ້ນຕໍ່ຄົນຕໍ່ປີ; ໃຫ້ກະຊວງສຶກສາທິການ ແລະ ກິລາ ຊີ້ນຳມະຫາວິທະຍາໄລແຫ່ງຊາດ ກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການນຳຂັ້ນສູງເຂົ້າຮ່ວມພິທີປູກຕົ້ນໄມ້ ແລະ ພົບປະນັກຮຽນ-ນັກສຶກສາ ຢູ່ມະຫາວິທະຍາໄລແຫ່ງຊາດ; ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ນະຄອນຫຼວງວຽງຈັນກະກຽມປູກຕົ້ນໄມ້ ຢູ່ສວນເຈົ້າອານຸວົງ.

9. ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ຮີບຮ້ອນປັບປຸງແຜນຜັງເມືອງຂອງນະຄອນຫຼວງວຽງຈັນ ໄລຍະທີ 3, ຊຸກຍູ້ບໍລິສັດທາງລົດໄຟ ລາວ-ຈີນ ໃຫ້ການຮ່ວມມືກັບຂະແໜງການເງິນ ເພື່ອເຂົ້າໄປຕິດຕັ້ງລະບົບເກັບຄ່າຊັກພິເສດ, ການຂົນສົ່ງແຮ່ທາດ; ພ້ອມນັ້ນ, ກໍໃຫ້ກະກຽມຄວາມພ້ອມຮອບດ້ານເພື່ອສ້ອມແປງທາງໃນລະດູຝົນ ໂດຍສະເພາະເສັ້ນທາງຫຼວງແຂວງຫາແຂວງ ບໍ່ໃຫ້ມີເສັ້ນທາງຂາດ.

10. ໃຫ້ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ຊີ້ນຳຄະນະຊີ້ນຳລະດັບຊາດການສຳຫຼວດພົນລະເມືອງ ແລະ ທີ່ຢູ່ອາໄສທົ່ວປະເທດ ຮີບຮ້ອນກວດກາຄືນຄວາມຖືກຕ້ອງຕົວເລກຕ່າງໆຂອງການສຳຫຼວດພົນລະເມືອງຄັ້ງທີ V ປີ 2025 ໃຫ້ສຳເລັດໂດຍໄວ.

11. ກະຊວງສາທາລະນະສຸກເອົາໃຈໃສ່ຕິດຕາມແລະວາງມາດຕະການປ້ອງກັນ, ແກ້ໄຂການລະບາດຂອງພະຍາດລະດູການ ໂດຍສ້າງແຜນຮັບມືແຕ່ຫົວທີ, ສ້າງລະບົບລາຍງານການລະບາດເປັນລະບົບ ແລະ ໃຫ້ໂລ່ງລ່ຽນ, ຮັບປະກັນສາງຢາມີພຽງພໍໂດຍສະເພາະວັກຊິນແລະຢາປິ່ນປົວພື້ນຖານ ທັງຕິດຕາມຊຸກຍູ້ແລະປະເມີນຄືນກ່ຽວກັບວຽກງານພັດທະນາສຸຂະພາບຂັ້ນຕົ້ນ ເປັນຕົ້ນ ນ້ຳສະອາດ, ວິດຖ່າຍ, ບ້ານສຸຂະອະນາໄມ ແລະບ້ານສາທາລະນະສຸກແບບຍືນຍົງ.

12. ສຸມໃສ່ແກ້ໄຂບັນດາຂໍ້ສະເໜີຂອງບັນດາແຂວງ ໃຫ້ແຕ່ລະພາກສ່ວນກວດກາຄືນບັນດາເອກະສານທາງການທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ທີ່ໄດ້ເຊັນຢັ້ງຢືນຈາກນາຍບ້ານໃນເມື່ອກ່ອນ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການຕ່າງໆ; ໃຫ້ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ສະໜອງຂໍ້ມູນຜົນການປະເມີນບັນດາໂຄງການຂຸດຄົ້ນບໍ່ແຮ່ໃຫ້ບັນດາແຂວງ ເພື່ອໃຫ້ແຂວງສະດວກໃນການຕິດຕາມ, ຊຸກຍູ້; ໃຫ້ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ປະສານສົມທົບກັບແຂວງອັດຕະປື ແລະ ແຂວງຈຳປາສັກ ເພື່ອລົງສຳຫຼວດເຂດ

ອ່ານຕໍ່ໜ້າ 8



ລັດຖະສະພາຕ່າງປະເທດ

# Fiji ຜ່ານກົດໝາຍການທ່ອງທ່ຽວສະບັບໃໝ່




(Xinhua) - ລັດຖະສະພາ ແຫ່ງ ສາທາລະນະລັດຟີຈິ ໄດ້ຜ່ານຮ່າງກົດໝາຍການທ່ອງທ່ຽວ ປີ 2026 ເມື່ອວັນພະຫັດທີ 28 ພຶດສະພານີ້ ເຊິ່ງຖືເປັນການປະຕິຮູບກົດໝາຍການທ່ອງທ່ຽວຄັ້ງໃຫຍ່ຄັ້ງທຳອິດຂອງປະເທດໃນຮອບກວ່າ 50 ປີ.

ວິລຽມ ກາໂວຄາ (Viliame Gavoka) ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການທ່ອງທ່ຽວ ແລະ ການບິນພົນລະເຮືອນ ກ່າວວ່າ: ຮ່າງກົດໝາຍສະບັບນີ້ມີຈຸດປະສົງທີ່ຈະສ້າງຂອບກົດໝາຍ ແລະ ສະຖາບັນທີ່ຄົບຖ້ວນສຳລັບການທ່ອງທ່ຽວ ເພື່ອສົ່ງເສີມແນວທາງປະຕິບັດທີ່ສະໜັບສະໜູນການເຕີບໂຕທາງເສດຖະກິດແບບຍືນຍົງ ພ້ອມທັງປົກປ້ອງສິ່ງແວດລ້ອມ ແລະ ອະນຸລັກມໍລະດົກທາງວັດທະນະທຳ; ກົດໝາຍສະບັບໃໝ່ນີ້ ຈະເຮັດໃຫ້ຂະແໜງອຸດສາຫະກຳທີ່ທັນສະໄໝຂຶ້ນ ດ້ວຍມາດຕະຖານທີ່ເຂັ້ມແຂງຂຶ້ນ, ການລົງທຶນທີ່ດີຂຶ້ນ, ຄວາມຮັບຜິດຊອບ, ແລະ ການປົກປ້ອງວັດທະນະທຳພື້ນເມືອງ ແລະ ຄວາມຮູ້ດັ້ງເດີມ. ນອກຈາກນີ້, ຍັງຈະສ້າງຕັ້ງສະພາການທ່ອງທ່ຽວແຫ່ງຊາດ, ກຳນົດມາດຕະຖານການທ່ອງທ່ຽວລະດັບຊາດ, ແລະ ສ້າງກອງທຶນການທ່ອງທ່ຽວເພື່ອສະໜັບສະໜູນພື້ນຖານໂຄງລ່າງ, ການເຝິກອົບຮົມ ແລະ ຜູ້ປະກອບການທ່ອງທ່ຽວຊຸມຊົນ.

ກາໂວຄາ ກ່າວວ່າ ໂຮມສະເຕ (homestay) ໃນໝູ່ບ້ານ, ປະສົບການທາງວັດທະນະທຳ ແລະ ຜູ້ປະກອບການທ່ອງທ່ຽວທ້ອງຖິ່ນ ແມ່ນຫົວໃຈສຳຄັນຂອງອຸດສາຫະກຳການທ່ອງທ່ຽວຂອງຟີຈິ ແລະ ບໍ່ຄວນຖືກວັດ ແທກດ້ວຍລະບົບທີ່ອອກແບບມາສຳລັບທຸລະກິດການຄ້າຂະໜາດໃຫຍ່ອີກຕໍ່ໄປ.

ເຈົ້າໜ້າທີ່ລະບຸວ່າ ຂະແໜງການທ່ອງທ່ຽວຂອງຟີຈິ ໄດ້ດຳເນີນງານພາຍໃຕ້ກົດໝາຍທີ່ຫຼ້າສະໄໝມາຕັ້ງແຕ່ປີ 1973, ເຖິງແມ່ນວ່າຈະຍັງເປັນກະດູກສັນຫຼັງຂອງເສດຖະກິດຂອງປະເທດກໍຕາມ.

# ສະພາແຫ່ງຊາດ Hungary ລົງມະຕິຍົກເລີກການຖອນຕົວອອກຈາກ ICC



(Xinhua) - ວັນພຸດທີ 27 ພຶດສະພານີ້, ສະພາແຫ່ງຊາດຮົງກາລີ ລົງມະຕິພາຍໃຕ້ຂັ້ນຕອນພິເສດກ່ຽວກັບຮ່າງກົດໝາຍເພື່ອຍົກເລີກການຕັດສິນໃຈຂອງປະເທດທີ່ຈະຖອນຕົວອອກຈາກສານອາຍາສາກົນ (International Criminal Court - ICC); ຮ່າງກົດໝາຍດັ່ງກ່າວ ໄດ້ຮັບການອະນຸມັດດ້ວຍຄະແນນສຽງເຫັນດີ 133 ສຽງ, ຄັດຄ້ານ 37 ສຽງ ແລະ ງົດອອກສຽງ 5 ສຽງ (ສະພາແຫ່ງຊາດຮົງກາລີ ມີທັງໝົດ 199 ທີ່ນັ່ງ), ການຕັດສິນໃຈຈະມີຜົນບັງຄັບໃຊ້ໃນວັນຖັດຈາກການປະກາດໃຊ້ກົດໝາຍ.

ລັດຖະບານໄດ້ຖະແຫຼງໃນຈົດໝາຍເຫດທາງລັດຖະການ ເມື່ອວັນທີ 22 ພຶດສະພາວ່າ ຈະຍົກເລີກການຕັດສິນໃຈຖອນຕົວອອກຈາກ ICC, ລວມທັງຍຸດຕິມາດຕະການທີ່ກ່ຽວຂ້ອງກັບການຍຸດຕິທຳມະນູນໂຣມ (Rome Statute) ແລະ ຂໍ້ຕົກລົງກ່ຽວກັບສິດທິພິເສດ ແລະ ພູມຕ້ານທານ (immunity) ຂອງສານ.

ນາຍົກລັດຖະມົນຕີ ປີເຕີ ມາຈາຣ໌ (Peter Magyar) ໄດ້ຍື່ນຮ່າງກົດໝາຍຕໍ່ສະພາແຫ່ງຊາດ ເມື່ອວັນທີ 26 ພຶດສະພາໃນນາມຂອງລັດຖະບານ.

ກ່ອນໜ້ານີ້, ຮົງກາລີ ໄດ້ດຳເນີນຂັ້ນຕອນເພື່ອຖອນຕົວອອກຈາກສານອາຍາສາກົນ. ລັດຖະບານປະກາດການຕັດສິນໃຈຖອນຕົວອອກຈາກ ICC ເມື່ອວັນທີ 3 ເມສາ 2025; ຕໍ່ມາ, ສະພາແຫ່ງຊາດໄດ້ອະນຸມັດການຖອນຕົວເມື່ອວັນທີ 20 ພຶດສະພາຂອງປີດຽວກັນ.

# Putin ລົງນາມກົດໝາຍອະນຸຍາດໃຫ້ກອງທັບປົກປ້ອງພົນລະເມືອງລັດເຊຍ




(Xinhua) - ປະທານາທິບໍດີ ວະລາດີມີຣ໌ ປູຕິນ ແຫ່ງລັດເຊຍ ໄດ້ລົງນາມໃນກົດໝາຍທີ່ອະນຸຍາດໃຫ້ກອງທັບລັດເຊຍໃຊ້ກຳລັງເພື່ອປົກປ້ອງພົນລະເມືອງລັດເຊຍທີ່ຖືກຕັດສິນລົງໂທດ ຫຼື ຈັບກຸມ ໂດຍສານຕ່າງປະເທດ ຫຼື ສານສາກົນ, ອີງຕາມເອກະສານທີ່ເຜີຍແຜ່ໃນເວັບໄຊທາງກົດໝາຍ ເມື່ອວັນຈັນທີ 25 ພຶດສະພານີ້.

ເອກະສານດັ່ງກ່າວລະບຸວ່າ ກອງທັບລັດເຊຍສາມາດເຂົ້າໄປມີສ່ວນຮ່ວມໃນການປົກປ້ອງພົນລະເມືອງລັດ ເຊຍທີ່ຖືກຈັບກຸມ, ກັກຕົວ ຫຼື ດຳເນີນຄະດີ ພາຍໃຕ້ການຕັດສິນຂອງສານຕ່າງປະເທດທີ່ປະຕິບັດໜ້າທີ່ໃນນາມ ຂອງລັດອື່ນ ໂດຍປາສະຈາກການມີສ່ວນຮ່ວມຂອງລັດເຊຍ, ແລະ ຂອບເຂດອຳນາດສານນັ້ນ ບໍ່ໄດ້ອີງໃສ່ສົນທິສັນຍາສາກົນທີ່ກ່ຽວຂ້ອງກັບລັດເຊຍ ຫຼື ມະຕິຂອງສະພາຄວາມໝັ້ນຄົງແຫ່ງສະຫະປະຊາຊາດ.

ຄາດວ່າກົດໝາຍສະບັບນີ້ ຈະມີຜົນບັງຄັບໃຊ້ 10 ວັນຫຼັງຈາກການເຜີຍແຜ່ຢ່າງເປັນທາງການ.

ກ່ອນໜ້ານີ້, ເວຍເຊສລາຟ ໂວໂລດິນ (Vyacheslav Volodin) ປະທານສະພາດູມາແຫ່ງລັດເຊຍ ກ່າວວ່າກົດໝາຍນີ້ມີຄວາມຈຳເປັນຕໍ່ການປົກປ້ອງຊາວລັດເຊຍ ເນື່ອງຈາກ "ຂະບວນການຍຸຕິທຳຂອງຕາເວັນຕົກ ໄດ້ ກາຍເປັນເຄື່ອງມືປາບປາມເພື່ອລົງໂທດຜູ້ທີ່ບໍ່ເຫັນດີກັບການຕັດສິນທີ່ກຳນົດໂດຍເຈົ້າໜ້າທີ່ເອີຣົບ".

# ກົດໝາຍ Algeria ທີ່ກຳນົດໃຫ້ການລ່າອານານິຄົມຂອງຝຣັ່ງເປັນຄວາມຜິດທາງອາຍາ ມີຜົນບັງຄັບໃຊ້




(Xinhua) - ກົດໝາຍຂອງອານເຊຣີທີ່ກຳນົດໃຫ້ການລ່າອານານິຄົມຂອງຝຣັ່ງເປັນຄວາມຜິດທາງອາຍາ ມີຜົນບັງຄັບໃຊ້ຢ່າງເປັນທາງການໃນວັນພະຫັດທີ 21 ພຶດສະພານີ້ ຫຼັງຈາກມີການເຜີຍແຜ່ໃນຈົດໝາຍເຫດທາງລັດຖະການຂອງປະເທດ; ກົດໝາຍສະບັບນີ້ປະກາດວ່າ ການລ່າອານານິຄົມຂອງຝຣັ່ງໃນອານເຊຣີຕັ້ງແຕ່ປີ 1830-1962 ແລະ "ຜົນສະທ້ອນໂດຍກົງ ແລະ ທາງອ້ອມທີ່ຍັງຄົງຢູ່ຫຼັງຈາກນັ້ນ" ເປັນ "ອາຊະຍາກຳຂອງລັດ" ແລະ ກຳນົດອາຊະຍາກຳລ່າອານານິຄົມ 31 ຂໍ້ "ບໍ່ສາມາດໝົດອາຍຸຄວາມໄດ້" ລວມທັງການຄາດຕະກຳໂດຍເຈດຕະນາ, ການສັ່ງການໂຈມຕີທາງທະຫານຕໍ່ພົນລະເຮືອນໂດຍເຈດຕະນາ, ແລະ ການໃຊ້ອາວຸດທີ່ບໍ່ເປັນໄປຕາມແບບແຜນ ແລະ ຖືກຫ້າມໃນລະດັບສາກົນ.

ກົດໝາຍລະບຸວ່າ ອານເຊຣີ ຈະໃຊ້ທຸກວິທີການທາງກົດໝາຍ ແລະ ຂະບວນການຍຸຕິທຳ ເພື່ອຮັບປະກັນໃຫ້ຝຣັ່ງ "ຍອມຮັບຢ່າງເປັນທາງການ" ໃນອະດີດອານານິຄົມຂອງຕົນລວມທັງການຈັດການກັບບັນຫາທີ່ກ່ຽວຂ້ອງກັບການລະເບີດນິວເຄລຍຢ່າງຖືກຕ້ອງ ແລະ ການສົ່ງຄືນຊັບສິນຂອງຄັງເງິນທີ່ "ຖືກລັກ"; ພ້ອມທັງລະບຸວ່າ ຜູ້ໃດກໍຕາມທີ່ສົ່ງເສີມການລ່າອານານິຄົມດ້ວຍວິທີການຕ່າງໆ ໂດຍມີຈຸດປະສົງເພື່ອພິສູດຄວາມຊອບທຳໃຫ້ແກ່ການລ່າອານານິຄົມຂອງຝຣັ່ງ ຫຼື ປະຕິເສດລັກສະນະທີ່ເປັນອາຊະຍາກຳຂອງການລ່າອານານິຄົມ ຈະຕ້ອງຖືກລົງໂທດຕັດອິດສະລະພາບແລະປັບໃໝ.

# ສະພາຍີ່ປຸ່ນ ຜ່ານຮ່າງກົດໝາຍສ້າງຕັ້ງ ຄະນະກຳມະການສືບລັບແຫ່ງຊາດ



(Xinhua) - ວັນພຸດທີ 27 ພຶດສະພານີ້, ສະພາສູງຍີ່ປຸ່ນ ໄດ້ຜ່ານຮ່າງກົດໝາຍເພື່ອສ້າງຕັ້ງຄະນະກຳມະການສືບລັບແຫ່ງຊາດ; ກົດໝາຍສະບັບນີ້ ເກີດຈາກຄວາມຕັ້ງໃຈຂອງນາຍົກລັດຖະມົນຕີ ນາງ ຊານະເອະ ທາຄາອິຈິ (Sanae Takaichi) ທີ່ຕ້ອງການລວມສູນ ແລະ ເສີມສ້າງຄວາມສາມາດດ້ານສືບລັບຂອງປະເທດ.

ຮ່າງກົດໝາຍດັ່ງກ່າວ ເຊິ່ງເຄີຍຜ່ານສະພາຜູ້ແທນລາດສະດອນມາແລ້ວກ່ອນໜ້ານີ້ ຍັງຄົງສ້າງຄວາມກັງວົນໃນທົ່ວສັງຄົມຍີ່ປຸ່ນຢ່າງຕໍ່ເນື່ອງ.




## ສະຫາຍ...

(ຕໍ່ຈາກໜ້າ 1)

(ສພຊ) - ໂດຍປະຕິບັດຕາມການຕົກລົງຂອງກົມການເມືອງສູນກາງພັກ, ໃນລະຫວ່າງວັນທີ 22-24 ພຶດສະພາ 2026 ສະຫາຍ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງເຊກອງ ໂດຍໄດ້ຮັບຟັງການລາຍງານກ່ຽວກັບການຊີ້ນຳ-ນຳພາຂອງຄະນະພັກແຂວງ, ອຳນາດການປົກຄອງແຂວງ ໂດຍມີສະຫາຍເລຂາພັກແຂວງ, ຮອງເລຂາພັກແຂວງ ແລະ ບັນດາຄະນະປະຈຳພັກແຂວງ ໂດຍສະເພາະແມ່ນສະພາບການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກ, ກໍຄືມະຕິກອງປະຊຸມຂອງອົງຄະນະພັກແຂວງ ຄັ້ງທີ XI ແລະ ສະພາບການພັດທະນາເສດຖະກິດ-ສັງຄົມຂອງແຂວງ.

ສະຫາຍຮອງປະທານສະພາແຫ່ງຊາດ ໄດ້ພົບປະໂອ້ລົມກັບພະນັກງານຫຼັກແຫຼ່ງຢູ່ສະໂມສອນໃຫຍ່ຂອງແຂວງ ເພື່ອຮັບຟັງການລາຍງານກ່ຽວກັບການຈັດຕັ້ງຜັນຂະຫຍາຍບັນດາເອກະສານສຳຄັນຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ເປັນຕົ້ນ ມະຕິຂອງກອງປະຊຸມໃຫຍ່ຄັ້ງທີ XII, ໂຄງການການເມືອງ ສະບັບທີ 3 ຂອງພັກ, ບົດລາຍງານການເມືອງ, ກົດລະບຽບຂອງພັກ ສະໄໝທີ XII, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2026-2030) ຄັ້ງທີ X, ບົດຄຳເຫັນຂອງສະຫາຍເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປລາວ ຄັ້ງວັນທີ 25/02/2026 ແລະ ເອກະສານສຳຄັນອື່ນໆ ອັນໄດ້ເຮັດໃຫ້ບັນດາສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ສັງກັດຢູ່ຂົງເຂດຕ່າງໆພາຍໃນແຂວງ ໄດ້ມີຄວາມຮັບຮູ້-ເຂົ້າໃຈ, ກຳແໜ້ນ, ເປັນເອກະພາບຕໍ່ແນວທາງນະໂຍບາຍຂອງພັກໃນໄລຍະໃໝ່.

ສະຫາຍຮອງປະທານສະພາແຫ່ງຊາດ ໄດ້ເນັ້ນໜັກໃຫ້ຄະນະພັກ ສືບຕໍ່ມີການຊີ້ນຳ-ນຳພາການຈັດຕັ້ງເຜີຍແຜ່ເຊື່ອມຊຶມເອກະສານສຳຄັນຂອງພັກໃຫ້ທົ່ວເຖິງເປົ້າໝາຍຕ່າງໆ ໂດຍມີການແບ່ງງານ, ແບ່ງຄວາມຮັບຜິດຊອບຢ່າງຈະແຈ້ງ, ມີການຫັນປ່ຽນໃໝ່ວິທີການ, ຮູບການການເຜີຍແຜ່, ເຊື່ອມຊຶມຕາມຄວາມເໝາະສົມ ແລະ ຈຸດພິເສດຂອງແຕ່ລະຂົງເຂດວຽກງານ, ແຕ່ລະເມືອງ, ແຕ່ລະຕາແສງ ເຮັດໃຫ້ປະຊາຊົນມີສ່ວນຮ່ວມໃນການຈັດຕັ້ງປະຕິບັດມະຕິດັ່ງກ່າວ; ເອົາໃຈໃສ່ສ້າງໃຫ້ມີຂະບວນການໃນການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ (ສອຈ) ໃຫ້ເປັນຮູບປະທຳ ໂດຍສະເພາະການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໂດຍສະເພາະແມ່ນການສ້າງວິຊາຊີບ, ການຝຶກອົບຮົມເຕັກນິກການປູກ-ການລ້ຽງ ໂດຍອາດສົມທົບກັບຜູ້ປະກອບການໃນການສ້າງຕົວແບບໃນການຜະລິດກະສິກຳ (ສິນຄ້າໂອດ່ອບຂອງແຂວງ); ຕ້ອງສົມທົບແໜ້ນ ແລະ ມີຄວາມກົມກຽວ ລະຫວ່າງການເຜີຍແຜ່, ເຊື່ອມຊຶມເອກະສານຂອງພັກ ກັບບັນດາມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງອົງຄະນະພັກແຂວງ, ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ໂດຍນຳໃຊ້ທ່າແຮງບົ່ມຊ້ອນຂອງແຂວງໃຫ້ມີປະສິດທິຜົນ.

ໂອກາດລົງເຄື່ອນໄຫວເຮັດວຽກຄັ້ງນີ້, ສະຫາຍຮອງປະທານສະພາແຫ່ງຊາດ ຍັງໄດ້ໄປຢ້ຽມຢາມເມືອງດາກຈຶງ, ພົບປະເຮັດວຽກກັບຄະນະນຳຂອງກຸ່ມບໍລິສັດ ຫວຽດເຟືອງ (ບໍລິສັດ ວີພີຈີ ລາວ-ຫວຽດ ຈຳກັດຜູ້ດຽວ) ເພື່ອຕິດຕາມຄວາມຄືບໜ້າຂອງໂຄງການຜະລິດອາລູມິນາໃນຕໍ່ໜ້າ; ນອກຈາກນັ້ນ, ຍັງໄດ້ຢ້ຽມຢາມໂຮງງານຜະລິດຕະພັນຈາກໂສມດາກຈຶງ ແລະ ພື້ນຖານການຜະລິດການປູກໂສມ ຢູ່ເມືອງຕື່ມອີກ.




#ບ່າວກະບື

**ໄລຍະ**ອາຍຸແກ່ ແມ່ນເວລາທີ່ຜູ້ຊາຍແນມເຫັນສາວງາມໆ ແລ້ວຟື້ນຄືນຄວາມຊົງຈຳ ແທນທີ່ຈະຟື້ນຄວາມຫວັງ.

#BAOKBU

Old age: A time when a man sees a pretty girl and it arouses his memory instead of his hopes.

## ຜົນກອງປະຊຸມ...

(ຕໍ່ຈາກໜ້າ 6)

ແດນເຊື່ອມຕໍ່ໃຫ້ລະອຽດຈະແຈ້ງ ແລະ ມີຄວາມຊັດເຈນ.

13. ໃຫ້ແຕ່ລະກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການປະເມີນການຈັດຕັ້ງປະຕິບັດຄຳສັ່ງເລກທີ 40/ນຍ, ລົງວັນທີ 13 ມີນາ 2026 ໂດຍສະເພາະການຜັດປ່ຽນກັນມາປະຈຳການ ມີດ້ານດີ, ດ້ານອ່ອນ ແລະ ຈະຄວນສືບຕໍ່ຄືແນວໃດ?; ສັງລວມກ່ຽວກັບການຈັດຕັ້ງປະຕິບັດທິດຊີ້ນຳຂອງລັດຖະບານ ຕາມທີ່ໄດ້ລະບຸໃນມະຕິ, ຄຳສັ່ງ, ແຈ້ງການຕ່າງໆ ແລ້ວລາຍງານໃຫ້ ຫສນຍ ຊາບກ່ອນການດໍາເນີນກອງປະຊຸມລັດຖະບານແຕ່ລະເດືອນ.

14. ສຸມໃສ່ຈັດຕັ້ງຜັນຂະຫຍາຍຜົນກອງປະຊຸມຕ່າງໆ, ຜົນການເຄື່ອນໄຫວວຽກງານຕ່າງປະເທດຂອງການນຳພັກ-ລັດ, ແຜນຮ່ວມມືສອງຝ່າຍກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ຂອບການຮ່ວມມືຫຼາຍຝ່າຍໃນອະນຸພາກພື້ນ ໃຫ້ເປັນຮູບປະທຳຫຼາຍຂຶ້ນ; ກະກຽມຕ້ອນຮັບການເດີນທາງຢ້ຽມຢາມ ສປປລາວ ຂອງການນຳຂັ້ນສູງຕ່າງປະເທດ; ກະກຽມໃຫ້ແກ່ການນຳຂັ້ນສູງຂອງພັກ ແລະ ລັດ ເດີນທາງຢ້ຽມຢາມລັດຖະກິດ, ຢ້ຽມຢາມທາງການ ແລະ ເຂົ້າຮ່ວມກອງປະຊຸມສຳຄັນຕ່າງໆ ຢູ່ຕ່າງປະເທດ ໃນເດືອນມິຖຸນາ 2026.

ສ່ວນບັນດາບົດລາຍງານ ເປັນຕົ້ນ ສະພາບພົ້ນເດັ່ນພາກພື້ນ ແລະ ສາກົນ, ວຽກງານ ປກຊ-ປກສ, ການເກັບກູ້ອາວຸດ ແລະ ວັດຖຸລະເບີດ ໃນໄລຍະຜ່ານມາ; ແຜນການປັບປຸງລະບົບການສຶກສາສາຍສາມັນຈາກ 5+4+3 ເປັນ 6+3+3 ແລະ ການສອບເສັງນັກຮຽນເກັ່ງທົ່ວປະເທດ; ການກະກຽມຄວາມພ້ອມ ເພື່ອເປັນເຈົ້າພາບຈັດກອງປະຊຸມລັດຖະມົນຕີວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳອາຊຽນ ຄັ້ງທີ 22, ກອງປະຊຸມເຈົ້າໜ້າທີ່ອາວຸໂສ ຄັ້ງທີ 89 ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ ໃນລະຫວ່າງວັນທີ 22-26 ມິຖຸນາ 2026; ສະພາບປາຕາຍຢູ່ນໍ້າເຊໂດນ ເມືອງຊະນະສົມບູນ ແຂວງຈຳປາສັກ ກອງປະຊຸມໄດ້ຊີ້ນຳພາກສ່ວນກ່ຽວຂ້ອງ ໄປປັບປຸງຕາມຄຳເຫັນຂອງສະມາຊິກລັດຖະບານ ໂດຍສະເພາະການກຳນົດທິດທາງແຜນການ, ບັນດາມາດຕະການ ກໍຄືແຜນວຽກຈຸດສຸມໃນຕໍ່ໜ້າ ໃຫ້ລະອຽດຈະແຈ້ງ, ຄົບຖ້ວນ, ແທດຕົວຈິງ, ລົງເລິກກະກຽມຄວາມພ້ອມດ້ານຕ່າງໆ ໃຫ້ຮັບປະກັນຜົນສຳເລັດ, ມີປະສິດທິພາບ ແລະ ປະສິດທິຜົນ, ຫຼີກລ່ຽງບັນຫາຫຍໍ້ທໍ້-ບົກພ່ອງ ທີ່ເຄີຍເກີດຂຶ້ນຜ່ານມາບໍ່ໃຫ້ເກີດຂຶ້ນຕື່ມອີກ.

ວາລະທີ 2: ລາຍງານສະພາບລວມການບັນຈຸລັດຖະກອນປະຈຳປີ 2025 ແລະ ແຜນຄວາມຕ້ອງການຈຳນວນຕົວເລກລັດຖະກອນໃໝ່ (ໂກຕາ) ປີ 2026 ຂອງບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງພັກ, ສູນກາງແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການປົກຄອງທ້ອງຖິ່ນ; ກອງປະຊຸມເຫັນດີຮັບຮອງຕົວເລກລັດຖະກອນໃໝ່ (ໂກຕາ) ປີ 2026 ແລະ ມອບໃຫ້ພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າກ່ຽວກັບການຈັດແບ່ງຕົວເລກລັດຖະກອນປີ 2026 ໃຫ້ແທດເໝາະກັບສະພາບຕົວຈິງ ແລ້ວຈິ່ງນຳສະເໜີຂັ້ນເທິງພິຈາລະນາຕາມລະບຽບການ.

ວາລະທີ 3: ກອງປະຊຸມເຫັນດີດ້ານຫຼັກການຮັບຮອງເອົາຮ່າງນິຕິກຳ ຈຳນວນ 3 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍຄັງເງິນແຫ່ງລັດ, ຮ່າງກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ສະບັບປັບປຸງ) ແລະ ຮ່າງດຳລັດວ່າດ້ວຍການເຊົ່າ ແລະ ສຳປະທານທີ່ດິນລັດ; ກອງປະຊຸມໄດ້ຊີ້ນຳໃຫ້ພາກສ່ວນກ່ຽວຂ້ອງນຳເອົາບັນດາຮ່າງນິຕິກຳດັ່ງກ່າວ ໄປປັບປຸງຕື່ມບາງດ້ານ ເປັນຕົ້ນ ການຈັດລຽງເນື້ອໃນ ແລະ ໂຄງສ້າງນິຕິກຳ, ການກຳນົດຈຸດປະສົງ, ການອະທິບາຍຄຳສັບ, ການກຳນົດຂໍ້ຫ້າມ, ການກຳນົດເນື້ອໃນວຽກງານໂຄສະນາປຸກລະດົມ ແລະ ການມີສ່ວນຮ່ວມຂອງພາກສ່ວນຕ່າງໆ ເຮັດໃຫ້ບັນດານິຕິກຳມີເນື້ອໃນຄົບຖ້ວນສົມບູນ, ລະອຽດ-ຈະແຈ້ງ, ຮັດກຸມ ສອດຄ່ອງກັບບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ທີ່ໄດ້ປະກາດໃຊ້ແລ້ວ ເພື່ອສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນດີ.

ໃນຕອນທ້າຍ, ທ່ານນາຍົກລັດຖະມົນຕີ ໄດ້ຮຽກຮ້ອງບັນດາທ່ານສະມາຊິກລັດຖະບານ ຈົ່ງນຳເອົາແຜນວຽກຈຸດສຸມປະຈຳເດືອນມິຖຸນາ 2026 ທີ່ກອງປະຊຸມໄດ້ເອກະພາບກັນໄປປັບປຸງເຂົ້າໃນແຜນວຽກຂອງຂະແໜງການຕົນ ໃຫ້ລະອຽດ, ມີການແບ່ງຄວາມຮັບຜິດຊອບໃຫ້ການຈັດຕັ້ງ, ບຸກຄະລາກອນແຕ່ລະຂັ້ນ ແລະ ມີຄາດໝາຍເວລາສຳເລັດຊັດເຈນ, ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະຂະແໜງການ ໃຫ້ແຂງແຮງ ແລະ ໄດ້ຮັບຜົນດີ.

**(ກົມປະຊາສຳພັນ ຫສນຍ)**

**ຄະນະບັນນາທິການ**
ທ່ານ ບໍ ທານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຽງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ